ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

03-09 ມີນາ 2023
ປີທີ 12
ສະບັບທີ 912
ລາຍສັປປະດາ

## ຫຼາຍບັນຫາສຳຄັນ ນຳເຂົ້າກອງປະຊຸມຄະນະປະຈຳສະພາແຫ່ງຊາດ



(ສພຊ) ໃນລະຫວ່າງວັນທີ 1-2 ມີນາ 2023 ຄະນະປະຈຳສະພາແຫ່ງຊາດ ໄດ້ດຳເນີນກອງປະຊຸມສະໄໝວິສາມັນປະຈຳເດືອນກຸມພາ 2023 ທີ່ຫ້ອງປະຊຸມຄະນະປະຈຳສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ, ມີບັນດາທ່ານ ຮອງປະທານຄະນະປະຈຳສະພາແຫ່ງຊາດ, ກຳມະການຄະນະປະຈຳສະພາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ກອງປະຊຸມ ໄດ້ຮັບຟັງການລາຍງານຄວາມຄືບໜ້າຂອງກົດໝາຍ 12 ສະບັບ ທີ່ຜ່ານການພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX, ຄວາມພ້ອມຮ່າງກົດໝາຍ ແລະ ລາຍງານແຜນການທາບທາມກົດໝາຍ 13 ສະບັບ ທີ່ຈະນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX, ລາຍງານການກະກຽມການຕິດຕາມກວດກາການປະເມີນການໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ; ລາຍງານຄວາມຄືບໜ້າ ການກະກຽມເປັນເຈົ້າພາບຈັດກອງປະຊຸມສຸດຍອດລັດຖະສະພາ ກຳປູເຈຍ-ລາວ-ຫວຽດນາມ (CLV); ຮ່າງຂໍ້ຕົກລົງ ວ່າດ້ວຍການປະສານງານລະຫວ່າງກຳມາທິການຍຸຕິທຳ ກັບ ສານປະຊາຊົນສູງສຸດ ແລະ ອົງການໄອຍະການສູງສຸດ; ລາຍງານກ່ຽວກັບການສ້າງແຜນການປັບປຸງກົດໝາຍຈຳນວນ 4 ສະບັບ ໃນຂົງເຂດສະພາແຫ່ງຊາດ ຮັບຜິດຊອບ; ລາຍງານຜົນການລົງຕິດຕາມ

ອ່ານຕໍ່ໜ້າ 11

## ຮອງປະທານສະພາແຫ່ງຊາດ ຕ້ອນຮັບການຢ້ຽມຂ່ຳນັບ ຂອງເລຂາທິການໃຫຍ່ສະພາຄູຣານໃຫຍ່ ມົງໂກລີ



ອ່ານໜ້າ 4

## ສະພາແຫ່ງຊາດ ເປີດຊຸດຝຶກອົບຮົມທິດສະດີການເມືອງ ຂັ້ນຕົ້ນ ຊຸດທີ I



(ສພຊ) ວັນທີ 24 ກຸມພາ 2023 ທີ່ສະພາແຫ່ງຊາດ ນະຄອນຫຼວງວຽງຈັນ ໄດ້ເປີດຊຸດເຝິກອົບຮົມທິດສະດີການເມືອງ ຂັ້ນຕົ້ນ ຊຸດທີ I ໃຫ້ແກ່ສະມາຊິກພັກ-ພະນັກງານ ພາຍໃນສະພາແຫ່ງຊາດ ໂດຍການເປັນປະທານຂອງສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ, ຮອງປະທານສະພາແຫ່ງຊາດ; ມີສະຫາຍ ນາງ ປິ່ງຄຳ ລາຊະສິມມາ ກຳມະການສູນກາງພັກ, ເລຂາທິການສະພາແຫ່ງຊາດ; ສະຫາຍ ນາງ ຄຳຫຼ້າ ແກ້ວອຸ່ນຄຳ ຄະນະບໍລິຫານງານພັກ, ຮອງຫົວໜ້າສະຖາບັນການເມືອງ-ການປົກ

ອ່ານຕໍ່ໜ້າ 3

## ກຳມາທິການກົດໝາຍ ຮ່ວມກັບສຳນັກງານປົກປ້ອງເງິນຝາກ ເຜີຍແຜ່ດຳລັດວ່າດ້ວຍການປົກປ້ອງເງິນຝາກ



(ສພຊ)ເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈກ່ຽວກັບເນື້ອໃນຂອງດຳລັດ ຂອງລັດຖະບານວ່າດ້ວຍການປົກປ້ອງເງິນຝາກ ສະບັບເລກທີ 329/ລບ, ລົງວັນທີ 25 ຕຸລາ 2017 ໂດຍສະເພາະການປົກປ້ອງເງິນຝາກ, ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງຜູ້ຝາກເງິນທີ່ຝາກໄວ້ກັບສະມາຊິກຂອງສຳນັກງານປົກປ້ອງເງິນຝາກ; ໃນວັນທີ 21 ກຸມພາ 2023 ກຳມາທິການກົດໝາຍ ຮ່ວມກັບສຳນັກງານປົກປ້ອງເງິນຝາກ ໄດ້ຈັດກອງປະຊຸມເຜີຍແຜ່ດຳລັດວ່າດ້ວຍການປົກປ້ອງເງິນຝາກ ຢູ່ທີ່ສະພາແຫ່ງຊາດ ນະຄອນຫຼວງວຽງຈັນ ໂດຍ

ອ່ານຕໍ່ໜ້າ 2

## ສຳເລັດການເຄື່ອນໄຫວ ແລະ ເຮັດວຽກຢູ່ ສສ.ຫວຽດນາມ ຂອງຄະນະຜູ້ແທນລາວ



(ສພຊ) ໃນລະຫວ່າງວັນທີ 25-28 ກຸມພາຜ່ານມາ, ຄະນະຜູ້ແທນສະພາແຫ່ງຊາດລາວ ນຳໂດຍສະຫາຍ ຄຳໃບ ດຳລັດ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດແຫ່ງ ສປປລາວ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຢູ່ ສສ.ຫວຽດ

ອ່ານຕໍ່ໜ້າ 4



### ກອງປະຊຸມປະຈຳປີ...

ອ່ານຕໍ່ໜ້າ 5



### ສະຫຼຸບຕິລາຄາ...

ອ່ານຕໍ່ໜ້າ 6



### ຄະນະເລຂາທິການ ສະພາປະຊາຊົນແຂວງ...

ອ່ານຕໍ່ໜ້າ 7

## ຊົມເຊີຍວັນແມ່ຍິງສາກົນ (08/03/1910-08/03/2023) ຄົບຮອບ 113 ປີ ຢ່າງສຸດໃຈ!

# ສສຊ ພົບປະກັບປະຊາຊົນບັນດາເຜົ່າ ຢູ່ແຂວງສາລະວັນ




(ສພຊ) ເພື່ອປະຕິບັດສິດ ແລະ ໜ້າທີ່ຂອງສະມາຊິກສະພາແຫ່ງຊາດ (ສສຊ) ໃນຖານະທີ່ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ, ລາຍງານການເຄື່ອນໄຫວວຽກງານໄລຍະຜ່ານມາ ຕໍ່ຜູ້ມີສິດເລືອກຕັ້ງ ໂດຍສະເພາະແມ່ນລາຍງານຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ຢ້ຽມຢາມຖາມຂ່າວ, ຮັບຟັງຄຳຄິດຄຳເຫັນ ຄວາມມຸ່ງມາດປາຖະໜາຂອງປະຊາຊົນລາວບັນດາເຜົ່າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສະພາແຫ່ງຊາດ, ໃນລະຫວ່າງວັນທີ 11-14 ກຸມພາ 2023 ທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ທັງເປັນສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 14 ແຂວງສາລະວັນ ໄດ້ເຄື່ອນໄຫວພົບປະກັບປະຊາຊົນ ຢູ່ເມືອງສະໜ້ອຍ, ເມືອງຕຸ້ມລານ ແຂວງສາລະວັນ ໂດຍມີທ່ານ ຂັນໄຊ ລັດຖະເຣົ້າ ຮອງປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ທັງເປັນຮອງປະທານສະພາປະຊາຊົນແຂວງ, ມີບັນດາທ່ານ ສສຊ ແລະ ສສຂ ປະຈຳເຂດເລືອກຕັ້ງເມືອງດັ່ງກ່າວ ເຂົ້າຮ່ວມ.

ການລົງພົບປະຄັ້ງນີ້ ແມ່ນໄດ້ເຄື່ອນໄຫວຢູ່2ເມືອງ, 7 ຈຸດ ຄື: ຈຸດດ່ານສາກົນລະໄລ, ຈຸດສຸມທີ 3 ອາວາວ, ຈຸດສຸມທີ5ອາຈາ ເມືອງສະໜ້ອຍ; ສຳລັບເມືອງຕຸ້ມລານ ມີ 3 ຈຸດ ຄື: ຈຸດຫ້ອງວ່າການເມືອງ, ບ້ານນາຮ່ອງນ້ອຍ, ບ້ານບອຍນ້ຳ ແລະ ບ້ານວັງລີ ເຊິ່ງມີຄະນະພັກເມືອງ, ຄະນະພັກຮາກຖານກຸ່ມບ້ານ, ອົງການຈັດຕັ້ງບ້ານ, ພະນັກງານ-ລັດຖະກອນ, ພະນັກງານອາວຸໂສບຳນານ, ທະຫານ-ຕຳຫຼວດ, ເຖົ້າແກ່ແນວໂຮມ, ພໍ່ແມ່ປະຊາຊົນ, ຄູ ແລະ ນັກຮຽນ ເຂົ້າຮ່ວມ ຈຳນວນທັງໝົດ 590 ຄົນ, ຍິງ 178 ຄົນ. ໃນການລົງພົບປະໃນແຕ່ລະຈຸດ ແມ່ນໄດ້ຮັບຟັງການລາຍງານໂດຍຫຍໍ້ກ່ຽວກັບສະພາບການພັດທະນາເສດຖະກິດ-ສັງຄົມ ຂອງເມືອງ ແລະ ບ້ານ; ພ້ອມດຽວກັນນັ້ນ, ສສຊ ແລະ ສສຂ ກໍໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ເປັນຕົ້ນແມ່ນເຜີຍແຜ່ບັນດາເນື້ອໃນມະຕິກອງປະຊຸມສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງສາລະວັນ, ແນວທາງຂອງພັກ, ນະໂຍບາຍຂອງລັດ ຕິດພັນກັບ 2 ວາລະແຫ່ງຊາດ ໃຫ້ບັນດາເປົ້າໝາຍເຂົ້າຮ່ວມໄດ້ຮັບຮູ້ ແລະ ເຂົ້າໃຈ. ນອກຈາກນັ້ນ, ກໍໄດ້ເປີດໂອກາດໃຫ້ພໍ່ແມ່ປະຊາຊົນ ໄດ້ສະແດງຄຳຄິດຄຳເຫັນ ແລະ ຂໍ້ສະເໜີຕ່າງໆ ຕໍ່ຜູ້ແທນຂອງຕົນ ເພື່ອນຳໄປຄົ້ນຄວ້າສະເໜີພາກສ່ວນກ່ຽວຂ້ອງ ແກ້ໄຂຕາມລະບຽບການ ເຊິ່ງຂໍ້ສະເໜີຕ່າງໆແມ່ນພົວພັນກັບອັນລວມ ແລະ ຊີວິດການເປັນຢູ່ຂອງປະຊາຊົນ ເປັນຕົ້ນການສ້າງເສັ້ນທາງເຂົ້າບ້ານ, ນ້ຳສະອາດ, ສາທາລະນະສຸກ, ໄຟຟ້າ ແລະ ອື່ນໆ.

ຜ່ານການສະເໜີຂອງປະຊາຊົນຂ້າງເທິງນັ້ນ, ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ ແລະ ຕາງໜ້າຂະແໜງການກ່ຽວຂ້ອງທີ່ເຂົ້າຮ່ວມຢູ່ໃນຄະນະ ກໍໄດ້ໃຫ້ການຊີ້ແຈງ, ອະທິບາຍໄປຕາມແຜນການຂອງລັດຖະບານ ກໍຄືຂອງແຂວງ ແລະ ເມືອງວາງອອກ ໂດຍຕິດພັນກັບເນື້ອໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງສາລະວັນ ຊຸດທີ II ເຊິ່ງໄດ້ຍົກໃຫ້ເຫັນຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ສິ່ງທ້າທາຍໃນການພັດທະນາເສດຖະກິດ-ສັງຄົມຂອງປະເທດໃນປັດຈຸບັນ ໂດຍສະເພາະຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ເປັນຕົ້ນ: ລາຄານ້ຳມັນແພງ, ອັດຕາເງິນເຟີ້, ລາຄາສິນຄ້າເພີ່ມຂຶ້ນ ແລະ ອື່ນໆ, ຍົກໃຫ້ເຫັນນະໂຍບາຍ, ມາດຕະການທີ່ລັດຖະບານ ກໍຄືທ້ອງຖິ່ນວາງອອກ ເພື່ອສູ້ຊົນຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ທີ່ລັດຖະບານກຳນົດ ໃຫ້ມີຜົນສຳເລັດ. ພ້ອມດຽວກັນນັ້ນ, ກໍໄດ້ຮຽກຮ້ອງໃຫ້ຄະນະພັກ, ອົງການປົກຄອງ ແລະ ປະຊາຊົນລາວບັນດາເຜົ່າ ຈົ່ງໄດ້ເປັນເຈົ້າການເຂົ້າຮ່ວມ, ປະກອບສ່ວນຈັດຕັ້ງປະຕິບັດຮ່ວມກັບພັກ-ລັດ ເປັນຕົ້ນຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ປະຕິບັດ 2 ວາລະແຫ່ງຊາດ, ເປັນເຈົ້າການໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເພີ່ມທະວີການເຕົ້າໂຮມຄວາມສາມັກຄີບັນດາເຜົ່າໃຫ້ເປັນປຶກແຜ່ນ, ສືບຕໍ່ເສີມຂະຫຍາຍ ແລະ ຮັກສາມູນເຊື້ອຮີດຄອງປະເພນີອັນດີງາມຂອງເຜົ່າ, ຂອງທ້ອງຖິ່ນ ແລະ ຂອງຊາດ, ປະຕິບັດສິດ ແລະ ພັນທະຂອງພົນລະເມືອງໃຫ້ຄົບຖ້ວນ ຕາມທີ່ໄດ້ກຳນົດໃນລັດຖະທຳມະນູນ ແລະ ກົດໝາຍ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃຫ້ຈະເລີນຮຸ່ງເຮືອງຂຶ້ນຢ່າງບໍ່ຢຸດຢັ້ງ.

ໃນການເຄື່ອນໄຫວພົບປະປະຊາຊົນຄັ້ງນີ້, ສສຊ ແລະ ສສຂ ຍັງໄດ້ນຳເອົາອຸປະກອນການຮຽນ ແລະ ອຸປະກອນກິລາ ຈຳນວນໜຶ່ງ ທີ່ລະດົມໄດ້ຈາກຜູ້ປະກອບການ ໄປມອບໃຫ້ໂຮງຮຽນ ແລະ ຈຸດໂຮງໂຮຽນທີ່ມີນັກຮຽນທຸກຍາກຂາດເຂີນ.

(ຂ່າວ: ຄຳແດງ ອິນທະສັກ; ພາບ: ຄັດສອນ ຮຸ່ງສະຫວ່າງ)

# ນັກເຝິກອົບຮົມທິດສະດີການເມືອງ ແລະ ການປົກຄອງ ຂອງມະຫາວິທະຍາໄລແຫ່ງຊາດ ທັດສະນະສຶກສາທີ່ສະພາແຫ່ງຊາດ



(ສພຊ) ໃນວັນທີ 22 ກຸມພາ 2023 ທີ່ສະພາແຫ່ງຊາດ ນະຄອນຫຼວງວຽງຈັນ, ນັກເຝິກອົບຮົມທິດສະດີການເມືອງ ແລະ ການປົກຄອງ ໄລຍະສັ້ນ 45 ວັນ ຊຸດທີ XV ຂອງມະຫາວິທະຍາໄລແຫ່ງຊາດ ໄດ້ມາທັດສະນະສຶກສາທີ່ສະພາແຫ່ງຊາດ ຈຳນວນ 170 ສະຫາຍ.

ທັງນີ້, ເພື່ອເຮັດໃຫ້ສະມາຊິກພັກ-ພະນັກງານ ທີ່ເປັນເປົ້າໝາຍກໍ່ສ້າງ ເປັນພະນັກງານນຳພາຫຼັກແຫຼ່ງ ໄດ້ເຊື່ອມຊຶມແນວທາງປ່ຽນແປງໃໝ່, ກຳແໜ້ນແນວທາງການເມືອງຂອງພັກ ເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບພາລະບົດບາດຂອງສະພາແຫ່ງຊາດ.

ການທັດສະນະສຶກສາໃນຄັ້ງນີ້, ບັນດານັກເຝິກອົບຮົມ ໄດ້ຮັບຟັງການແນະນຳກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາແຫ່ງຊາດໂດຍຫຍໍ້ ຈາກສະຫາຍ ອຳໄພ ຈິດມານົບ ກຳມະການຄະນະບໍລິຫານງານພັກສະພາແຫ່ງຊາດ, ຮອງປະທານກຳມາທິການກົດໝາຍ; ພ້ອມນັ້ນ, ກໍໄດ້ມີຖາມ-ຕອບ ແລະ ສົນທະນາແລກປ່ຽນໃນຈຸດທີ່ນັກເຝິກອົບຮົມໃຫ້ຄວາມສົນໃຈ; ຈາກນັ້ນ, ຍັງໄດ້ເຂົ້າຢ້ຽມຊົມຕຶກອາຄານຫໍສະພາແຫ່ງຊາດຕື່ມອີກ.

(ນາງ ສຸພາວັນ ຫອມສະນິດ)

## ກຳມາທິການ...

(ຕໍ່ຈາກໜ້າ 1)

ການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ ທັງເປັນປະທານກຳມາທິການກົດໝາຍ, ເຂົ້າຮ່ວມມີປະທານ-ຮອງປະທານກຳມາທິການສະພາແຫ່ງຊາດ, ຮອງເລຂາທິການສະພາແຫ່ງຊາດ, ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ ສັງກັດກຳມາທິການກົດໝາຍ ທີ່ປະຈຳຢູ່ສູນກາງ, ຄະນະກົມ ແລະ ຄະນະພະແນກ ພ້ອມດ້ວຍພະນັກງານ-ວິຊາການ ພາຍໃນສະພາແຫ່ງຊາດ.

ກອງປະຊຸມ ໄດ້ຮັບຟັງຜູ້ຕາງໜ້າຈາກສຳນັກງານປົກປ້ອງເງິນຝາກ ສະເໜີສະພາບລວມຂອງສຳນັກງານປົກປ້ອງເງິນຝາກ ພ້ອມທັງເຜີຍແຜ່ດຳລັດວ່າດ້ວຍການປົກປ້ອງເງິນຝາກ ສະບັບເລກທີ 329/ລບ, ລົງວັນທີ 25 ຕຸລາ 2017; ຈາກນັ້ນ, ຜູ້ເຂົ້າຮ່ວມ ໄດ້ພ້ອມກັນແລກປ່ຽນຄຳຄິດຄຳເຫັນ ແລະ ຖາມ-ຕອບ ໃນບັນຫາທີ່ຕົນສົນໃຈ.

ໂອກາດດັ່ງກ່າວ, ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ໄດ້ມີຄຳເຫັນກ່າວປິດກອງປະຊຸມວ່າ: ຜ່ານການຮັບຟັງການເຜີຍແຜ່ດຳລັດວ່າດ້ວຍການປົກປ້ອງເງິນຝາກໃນຄັ້ງນີ້ ເຫັນວ່າຄະນະຮັບຜິດຊອບໄດ້ເອົາໃຈໃສ່ໃນການນຳສະເໜີເນື້ອໃນຂອງດຳລັດວ່າດ້ວຍການປົກປ້ອງເງິນຝາກ ໄດ້ຢ່າງຈະແຈ້ງສົມຄວນ; ບັນດາທ່ານຜູ້ເຂົ້າຮ່ວມໄດ້ເອົາໃຈໃສ່ຮັບຟັງ ພ້ອມທັງໄດ້ຕັ້ງຄຳຖາມເຈາະຈີ້ມ ແລະ ປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ ເຮັດໃຫ້ກອງປະຊຸມມີບັນຍາກາດຟົດຟື້ນ ແລະ ເຕັມໄປດ້ວຍເນື້ອໃນທີ່ສຳຄັນ ເຊິ່ງໄດ້ເປັນຂົດໝາຍທີ່ດີ ແລະ ເປັນປະໂຫຍດຢ່າງຫຼວງຫຼາຍ ໃຫ້ແກ່ຜູ້ເຂົ້າຮ່ວມໄດ້ນຳເອົາຂໍ້ມູນ ແລະ ບົດຮຽນທີ່ດີນີ້ໄປເຜີຍແຜ່ຕໍ່, ສຳລັບເບື້ອງສຳນັກງານປົກປ້ອງເງິນຝາກ ກໍໄດ້ຮັບຄຳຄິດເຫັນທີ່ດີຈາກຜູ້ເຂົ້າຮ່ວມ ເພື່ອນຳໄປເປັນພື້ນຖານໃນການພັດທະນາວຽກງານຂອງຕົນໃນອະນາຄົດ; ພ້ອມນັ້ນ, ທ່ານຍັງໄດ້ສະແດງຄວາມເຊື່ອໝັ້ນວ່າ ບັນດາຜູ້ເຂົ້າຮ່ວມ ຈະມີຄວາມຮັບຮູ້ ແລະ ເຂົ້າໃຈ ຕໍ່ກັບດຳລັດວ່າດ້ວຍການປົກປ້ອງເງິນຝາກ ກໍຄືວຽກງານການປົກປ້ອງເງິນຝາກ ໃນລະດັບທີ່ດີພໍສົມຄວນ ແລະ ຮຽກຮ້ອງມາຍັງບັນດາຜູ້ເຂົ້າຮ່ວມ ຈົ່ງເປັນເຈົ້າການໃນການສຶກສາດຳລັດດັ່ງກ່າວ ດ້ວຍຕົນເອງຕື່ມ.

ສຳນັກງານປົກປ້ອງເງິນຝາກ ຫຼື ກອງທຶນປົກປ້ອງຜູ້ຝາກເງິນ (ຊື່ເກົ່າ) ໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 23 ກັນຍາ 1999 ເຊິ່ງໃນເມື່ອກ່ອນໄດ້ເຄື່ອນໄຫວພາຍໃຕ້ກົດລະບຽບວ່າດ້ວຍກອງທຶນປົກປ້ອງຜູ້ຝາກເງິນ ທີ່ອອກໂດຍທະນາຄານ ແຫ່ງ ສປປລາວ, ຈົນມາຮອດທ້າຍເດືອນຕຸລາ ປີ 2017 ດຳລັດວ່າດ້ວຍການປົກປ້ອງເງິນຝາກ ຈຶ່ງຖືກຮັບຮອງ ແລະ ປະກາດໃຊ້ ຢ່າງເປັນທາງການ ແລະ ປ່ຽນແທນ ກົດລະບຽບວ່າດ້ວຍກອງທຶນປົກປ້ອງຜູ້ຝາກເງິນ. ພາຍຫຼັງດຳລັດສະບັບດັ່ງກ່າວຖືກຮັບຮອງ ແລະ ປະກາດໃຊ້ ສຳນັກງານປົກປ້ອງເງິນຝາກ ກໍໄດ້ເລັ່ງຄົ້ນຄວ້າສ້າງບັນດານິຕິກຳລຸ່ມດຳລັດວ່າດ້ວຍການປົກປ້ອງເງິນ ເພື່ອຜັນຂະຫຍາຍບາງມາດຕາຂອງດຳລັດວ່າດ້ວຍການປົກປ້ອງເງິນຝາກ ໄປຄຽງຄູ່ກັບການກະກຽມເຜີຍແຜ່ດຳລັດດັ່ງກ່າວໃຫ້ສັງຄົມຮັບຊາບກັນຢ່າງກວ້າງຂວາງ ໃນຂອບເຂດທົ່ວປະເທດ ເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈກ່ຽວກັບວຽກງານປົກປ້ອງເງິນຝາກ ກໍຄືພາລະບົດບາດ-ໜ້າທີ່ຂອງສຳນັກງານປົກປ້ອງເງິນຝາກ ໃນການເຮັດໜ້າທີ່ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ຝາກເງິນ ໃນເວລາທີ່ສະຖາບັນການເງິນໃດໜຶ່ງ ທີ່ເປັນສະມາຊິກຫາກຕົກໃນສະພາວະລົ້ມລະລາຍ (ໝາຍຄວາມວ່າສຳນັກງານປົກປ້ອງເງິນຝາກ ຈະຈ່າຍຄືນເງິນຝາກ ໃຫ້ແກ່ຜູ້ຝາກເງິນ ທີ່ຝາກເງິນໄວ້ນຳທະນາຄານທຸລະກິດ ຫຼືສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ທີ່ເປັນສະມາຊິກຂອງສຳນັກງານປົກປ້ອງເງິນຝາກ ໃນວົງເງິນປົກປ້ອງທີ່ກຳນົດໄວ້ຕາມລະບຽບການ); ມາຮອດປັດຈຸບັນ ສຳນັກງານປົກປ້ອງເງິນຝາກ ໄດ້ຮັບການສ້າງຕັ້ງມາເປັນໄລຍະເວລາເກືອບ 23 ປີ ໃນການປະກອບສ່ວນຮັກສາສະຖຽນລະພາບທາງດ້ານການເງິນຂອງປະເທດ ເວົ້າລວມ, ເວົ້າສະເພາະ ແມ່ນການປົກປ້ອງສິດຜົນປະໂຫຍດຂອງຜູ້ຝາກເງິນ ແນໃສ່ສ້າງຄວາມເຊື່ອໝັ້ນໃຫ້ແກ່ສັງຄົມຕໍ່ກັບລະບົບທະນາຄານ ຢູ່ໃນ ສປປລາວ.

(ຂ່າວ: ສຸພາວັນ ຫອມສະນິດ; ພາບ: ສອນສັກ ວັນວິໄຊ)

# ຜົນສຳເລັດການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2023

ຕໍ່ຈາກສະບັບກ່ອນ...

6. ດ້ານການເຄື່ອນໄຫວວຽກງານຕ່າງປະເທດ

ຄະນະປະຈຳສະພາແຫ່ງຊາດ ໄດ້ເຄື່ອນໄຫວວຽກງານການຕ່າງປະເທດຂອງຕົນ ສອດຄ່ອງຕາມແນວທາງການຕ່າງປະເທດຂອງພັກ ດ້ວຍຄວາມເປັນເຈົ້າການ ແລະ ມີຜົນສຳເລັດເປັນຢ່າງດີ ເປັນຕົ້ນການລົງນາມບົດບັນທຶກການຮ່ວມມື (MOU) 7 ສະບັບ ລະຫວ່າງສະພາແຫ່ງຊາດລາວກັບ ສະພາແຫ່ງຊາດຫວຽດນາມ, ກຳປູເຈຍ ແລະ ລາຊະອານາຈັກໄທ; ຄົ້ນຄວ້າບົດບັນທຶກການຮ່ວມມື (MOU) 5 ສະບັບ ລະຫວ່າງສະພາປະຊາຊົນແຂວງຜົ້ງສາລີ, ແຂວງຫຼວງນ້ຳທາ, ແຂວງອຸດົມໄຊ, ແຂວງຫຼວງພະບາງ ຮ່ວມກັບສະພາປະຊາຊົນແຂວງຢູນນານ, ສປ ຈີນ; ລະຫວ່າງສະພາປະຊາຊົນແຂວງໄຊສົມບູນ ຮ່ວມກັບສະພາປະຊາຊົນແຂວງ ເຊີນລາ, ສສ.ຫວຽດນາມ; ເອົາໃຈໃສ່ພົວພັນຮ່ວມມືໃນຂອບສອງຝ່າຍ ແລະ ຫຼາຍຝ່າຍ ໄດ້ຮັບການເສີມຂະຫຍາຍ ໂດຍສະເພາະກັບບັນດາປະເທດເພື່ອນມິດຍຸດທະສາດ ແລະ ສາກົນໄດ້ຈຳນວນ 122 ເທື່ອຄັ້ງ. ໃນນີ້, ຄະນະຜູ້ແທນຂັ້ນສູງຂອງສະພາແຫ່ງຊາດ ໄດ້ເຄື່ອນໄຫວຢ້ຽມຢາມ ແລະ ແລກປ່ຽນບົດຮຽນ ຈຳນວນ 11 ຄະນະ; ເຂົ້າຮ່ວມກອງປະຊຸມລະດັບຕ່າງໆ ຈຳນວນ 26 ເທື່ອຄັ້ງ; ຕ້ອນຮັບຄະນະຜູ້ແທນຂັ້ນສູງຂອງຕ່າງປະເທດ ຈຳນວນ 32 ຄະນະ; ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ແລະ ເຂົ້າອວຍພອນຂອງບັນດາຄະນະຜູ້ແທນພາຍໃນ ແລະ ຕ່າງປະເທດ ລວມທັງທຸຕານຸທູດ, ອົງການຈັດຕັ້ງສາກົນ ປະຈຳຢູ່ ສປປລາວ ຈຳນວນ 53 ຄະນະ.

7. ການເຄື່ອນໄຫວວຽກງານປິ່ນອ້ອມ

ຄະນະປະຈຳສະພາແຫ່ງຊາດ ໄດ້ເອົາໃຈໃສ່ຊີ້ນຳການສ້າງເງື່ອນໄຂສະດວກດ້ານພື້ນຖານໂຄງລ່າງ ໃຫ້ບັນດາສະພາປະຊາຊົນແຂວງ ດ້ວຍການລົງຕິດຕາມກວດກາບັນດາໂຄງການກໍ່ສ້າງຫ້ອງການສະພາແຂວງ ຢູ່ຫຼາຍແຂວງ, ຜ່ານການລົງຕິດຕາມກວດກາເຫັນວ່າ ບັນດາໂຄງການນັ້ນມີຫຼາຍປະເພດ: ໂຄງການສຳເລັດແລ້ວແຕ່ບໍ່ທັນໄດ້ຊຳລະ (ໂຄງການຕິດໜີ້), ໂຄງການທີ່ມີການດັດແກ້ແລະເພີ່ມມູນຄ່າໂຄງການ ເຊິ່ງບາງໂຄງການ ມີການດັດແກ້ສູງ; ໂຄງການອອກແບບກໍ່ສ້າງຫ້ອງການ ທີ່ໄດ້ຊຳລະຄ່າອອກແບບ ແຕ່ບໍ່ທັນມີງົບປະມານເລີ່ມໂຄງການໄດ້ ແລະ ຕ້ອງໄດ້ໄປຕາມຂັ້ນຕອນຂອງກົດໝາຍງົບປະມານ ແລະ ການລົງທຶນຂອງລັດ; ສ່ວນໂຄງການສ້ອມແປງນັ້ນ ໄດ້ມີການຕົກລົງໃຫ້ທາງແຂວງຮັບຜິດຊອບ, ບາງໂຄງການກໍ່ມີການມອບໂອນຄືນໃຫ້ສະພາແຂວງເປັນເຈົ້າຂອງໂຄງການ. ພ້ອມດຽວກັນນັ້ນ, ການນຳໃຊ້ງົບປະມານແມ່ນອີງໃສ່ຈຳນວນງົບປະມານ ທີ່ສະພາແຫ່ງຊາດໄດ້ຮັບຈາກກະຊວງການເງິນ ແລະ ຜ່ານມາກໍໄດ້ມີການປະຊຸມຖອດຖອນບົດຮຽນ ປະຈຳປີ 2022.

ຂ. ສາເຫດພາໃຫ້ມີດ້ານດີ ແລະ ຜົນສຳເລັດ

1. ຍ້ອນກົມການເມືອງ, ຄະນະເລຂາທິການສູນກາງພັກ ໄດ້ເອົາໃຈໃສ່ນຳພາ-ຊີ້ນຳຢ່າງເປັນລະບົບປົກກະຕິ ຕໍ່ການເຄື່ອນໄຫວຂອງສະພາແຫ່ງຊາດ ໃນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ກຳນົດໃນລັດຖະທຳມະນູນ ແລະ ກົດໝາຍ; ຄະນະພັກ, ຄະນະປະຈຳສະພາແຫ່ງຊາດ ໄດ້ມີການນຳພາ-ຊີ້ນຳຢ່າງໃກ້ຊິດ, ມີການລາຍງານຂໍທິດຊີ້ນຳຈາກກົມການເມືອງສູນກາງພັກ ເປັນຕົ້ນການກະກຽມ ແລະ ດຳເນີນກອງປະຊຸມສະພາແຫ່ງຊາດ, ການເຄື່ອນໄຫວວຽກງານຕ່າງປະເທດ ແລະ ວຽກງານອື່ນໆ ຢ່າງເປັນປະຈຳ;

2. ຄະນະປະຈຳສະພາແຫ່ງຊາດ ເອົາໃຈໃສ່ດຳເນີນກອງປະຊຸມຂອງຕົນ ຢ່າງເປັນປົກກະຕິທຸກໆເດືອນ ແລະ ບາງເດືອນຍັງໄດ້ດຳເນີນກອງປະຊຸມວິສາມັນຂອງຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ໃຫ້ມີຄວາມເປັນເອກະພາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ; ຕິດຕາມ, ຊຸກຍູ້, ຕີລາຄາປະເມີນຜົນການປະຕິບັດໜ້າທີ່ວຽກງານຂອງກົງຈັກການຈັດຕັ້ງພາຍໃນສະພາແຫ່ງຊາດ ຕາມຂົງເຂດຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ ທີ່ກຳນົດໄວ້ໃນກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງ;

3. ບັນດາກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດ, ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ພ້ອມດ້ວຍພະນັກງານ-ລັດຖະກອນ ຂອງສະພາແຫ່ງຊາດ ມີຄວາມຫ້າວຫັນ ແລະ ເປັນເຈົ້າການໃນການຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ, ມີຄວາມຮັບຜິດຊອບສູງ, ປະດິດສ້າງ, ມີການປະສານສົມທົບວຽກງານກັບພາກສ່ວນຕ່າງໆ ທັງພາຍໃນ ແລະ ພາຍນອກ;

4. ສະມາຊິກສະພາແຫ່ງຊາດ ໄດ້ເປັນເຈົ້າການຍົກສູງບົດບາດການເຄື່ອນໄຫວວຽກງານຂອງຕົນ ຢູ່ກອງປະຊຸມສະພາແຫ່ງຊາດ, ການເຄື່ອນໄຫວຕິດຕາມກວດກາ ນັບມື້ມີປະສິດທິຜົນສູງຂຶ້ນ;

5. ກົງຈັກເສນາທິການພາຍໃນສະພາແຫ່ງຊາດ ໄດ້ມີນິຕິກຳເປັນບ່ອນອີງ, ມີການປັບປຸງສັບຊ້ອນ, ຍົກຍ້າຍ ແລະ ການກຳນົດຕຳແໜ່ງງານໃນລະດັບແນ່ນອນ ເຊິ່ງມີຄວາມຄ່ອງຕົວໃນການປະຕິບັດໜ້າທີ່ຂອງຕົນ.

ຄ. ດ້ານຄົງຄ້າງ

1. ການປະສານສົມທົບເຊິ່ງກັນ ແລະ ກັນ ຂອງພາກສ່ວນຕ່າງໆ ໃນການສ້າງ ແລະ ປັບປຸງກົດໝາຍທີ່ພົວ ພັນກັບຫຼາຍຂົງເຂດວຽກງານ ບາງຄັ້ງບໍ່ທັນກົມກຽວ; ການສ້າງ ແລະ ປັບປຸງກົດໝາຍຈຳນວນໜຶ່ງ ຍັງບໍ່ທັນບັນລຸຕາມແຜນການປີ ລວມທັງການສ້າງນິຕິກຳໃຕ້ກົດໝາຍ; ການສ້າງກົດໝາຍມີຈຳນວນຫຼາຍ ແຕ່ການຈັດຕັ້ງປະເມີນກົດໝາຍຍັງເຮັດໄດ້ໜ້ອຍ; ຄວາມເປັນເຈົ້າການລົງເລິກຄົ້ນຄວ້າບົດຮຽນຂອງເພື່ອນມິດ ແລະ ສາກົນ ຍັງບໍ່ທັນສູງ, ບາງກົດໝາຍ ຍັງຕ້ອງໄດ້ປັບປຸງຫຼີ້ບໄປຫຼີ້ບມາຫຼາຍຄັ້ງ ເຮັດໃຫ້ການປະກາດໃຊ້ກົດໝາຍ ທີ່ສະພາແຫ່ງຊາດຮັບຮອງເອົາແລ້ວ ຍັງບໍ່ທັນປະຕິບັດໄດ້ຕາມກຳນົດເວລາ;

2. ການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ໂດຍຜ່ານກົນໄກດຳເນີນກອງປະຊຸມຄະນະປະຈຳສະພາແຫ່ງຊາດ ບາງຄັ້ງຄາວການຄົ້ນຄວ້າວິເຄາະວິໄຈບັນຫາ ແລະ ກັ່ນຕອງຂໍ້ມູນ ຍັງບໍ່ທັນເລິກເຊິ່ງ, ການປະສານສົມທົບ ກັບພາກສ່ວນກ່ຽວຂ້ອງ ຍັງບໍ່ທັນກົມກຽວ ເຮັດໃຫ້ເນື້ອໃນທີ່ນຳມາພິຈາລະນາຢູ່ກອງປະຊຸມ ມີຫຼາຍຫົວຂໍ້, ເວລາຈຳກັດ, ການຄົ້ນຄວ້າພິຈາລະນາເນື້ອໃນບໍ່ທັນເລິກເຊິ່ງເທົ່າທີ່ຄວນ;

3. ການຕິດຕາມກວດກາເຖິງວ່າເຮັດໄດ້ຫຼາຍຂົງເຂດ, ແຕ່ຄຸນນະພາບໃນການແກ້ໄຂບັນຫາທີ່ກວດພົບເຫັນ ຍັງບໍ່ທັນສູງ; ການຊຸກຍູ້ພາກສ່ວນກ່ຽວຂ້ອງໃນການແກ້ໄຂວຽກງານສາຍດ່ວນ ຍັງຊັກຊ້າ ແລະ ບໍ່ທັນແກ້ໄຂໄດ້ຫຼາຍເທົ່າທີ່ຄວນ; ການສ້າງແຜນການຕິດຕາມກວດກາ ເຖິງວ່າໄດ້ກຳນົດຫົວຂໍ້ລະອຽດ ແຕ່ການຈັດຕັ້ງປະຕິບັດວຽກງານຕົວຈິງຍັງບໍ່ທັນໄດ້ລົງເລິກແນະນຳວິທີແກ້ໄຂ ແລະ ແຈ້ງຜົນຂອງການແກ້ໄຂໃຫ້ແກ່ຂະແໜງການທີ່ກ່ຽວຂ້ອງ ຂອງທ້ອງຖິ່ນຮັບຮູ້ນຳ;

4. ການແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ທີ່ສົ່ງມາຜ່ານສະພາແຫ່ງຊາດ ຍັງຊັກຊ້າ ຫຼາຍຄະດີຍັງ

ອ່ານຕໍ່ສະບັບໜ້າ...

## ສະພາແຫ່ງຊາດ...

(ຕໍ່ຈາກໜ້າ 1)

ຄອງແຫ່ງຊາດ; ສະຫາຍ ສີຈັນ ສູນດາລາ ຮອງຫົວໜ້າກົມຄຸ້ມຄອງການຮຽນ-ການສອນ, ຫົວໜ້າກົມຄຸ້ມຄອງການຮຽນ-ການສອນ ສະຖາບັນການເມືອງ-ການປົກຄອງແຫ່ງຊາດ; ບັນດາສະຫາຍຄະນະບໍລິຫານງານພັກ, ຕາງໜ້າຈາກບັນດາໜ່ວຍພັກ, ບັນດາອາຈານ, ນັກສຳມະນາກອນຈາກສະພາແຫ່ງຊາດ ເຂົ້າຮ່ວມ.

ທັງນີ້, ເພື່ອສ້າງຄວາມຮັບຮູ້ເຂົ້າໃຈຢ່າງເປັນເອກະພາບ ກ່ຽວກັບທິດສະດີການເມືອງ ໃຫ້ແກ່ສະມາຊິກພັກ-ພະນັກງານຫຼັກແຫຼ່ງ ພາຍໃນສະພາແຫ່ງຊາດ ໃຫ້ມີຄວາມເຊື່ອໝັ້ນຕໍ່ອຸດົມການຂອງພັກ, ມີທັດສະນະຫຼັກໝັ້ນການເມືອງ, ຖືເອົາທິດສະດີການເມືອງເປັນພື້ນຖານໃນການເສີມຂະຫຍາຍທັດສະນະປະຕິວັດໃຫ້ໜັກແໜ້ນຂຶ້ນຕື່ມ, ຍົກສູງຄວາມສາມາດໃນການວິເຄາະບັນຫາຢ່າງມີວິທະຍາສາດ ແລະ ມີຄວາມສາມາດໃນການນຳໃຊ້ວິທີວິທະຍາໃນການນຳພາ-ຄຸ້ມຄອງ, ວິທີການຝຶກຝົນຫຼໍ່ຫຼອມບຸກຄະລິກຂອງພະນັກງານນຳພາ-ຄຸ້ມຄອງ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການ ຂອງປະເທດຊາດໃນໄລຍະໃໝ່ ໃນການຫັນເປັນອຸດສາຫະກຳ, ທັນສະໄໝ, ການເຊື່ອມໂຍງ, ການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ກ້າວໜ້າຢ່າງບໍ່ຢຸດຢັ້ງ ແລະ ເພື່ອເຮັດໃຫ້ທິດສະດີການເມືອງ ອັນປະກອບດ້ວຍທິດສະດີມາກ-ເລນິນ, ແນວຄິດ ໄກສອນ ພົມວິຫານ, ມູນເຊື້ອ ແລະ ປະຫວັດສາດ ຂອງພັກ, ຂອງຊາດ, ກົດລະບຽບພັກ, ແນວທາງນະໂຍບາຍຂອງພັກ ແລະ ລັດ ກາຍເປັນພື້ນຖານແນວຄິດ ແລະ ການກະທຳ ຂອງສະມາຊິກພັກ-ພະນັກງານ ສາມາດເຮັດໃຫ້ທຸກຄົນມີຄວາມຮັບຮູ້, ເຂົ້າໃຈ, ມີຄວາມເຊື່ອໝັ້ນ, ສະໜັບສະໜູນ ແລະ ຕື່ນຕົວປະຕິບັດແນວທາງນະໂຍບາຍຂອງພັກ ແລະ ລັດ, ຍົກລະດັບຄວາມຮູ້ກ່ຽວກັບທັດສະນະຂອງພັກ, ນະໂຍບາຍຂອງລັດຢ່າງເລິກເຊິ່ງ, ມີຫຼັກໝັ້ນຢ່າງໜັກແໜ້ນ, ມີຄຸນສົມບັດ, ສົນທຳປະຕິວັດດີ, ມີຈິດໃຈຮັກຊາດ, ຮັບໃຊ້ປະຊາຊົນຢ່າງແທ້ຈິງ.

ໃນພິທີເປີດ, ສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ມີຄຳເຫັນໂອ້ລົມຕໍ່ຊຸດເຝິກອົບຮົມວ່າ: ໂດຍເຫັນໄດ້ຄວາມສຳຄັນ ແລະ ຈຳເປັນໃນການສ້າງໃຫ້ສະມາຊິກພັກ-ພະນັກງານຫຼັກແຫຼ່ງ ຂອງສະພາແຫ່ງຊາດ ໃຫ້ມີຄວາມຮູ້ດ້ານທິດສະດີພື້ນຖານຂອງລັດທິມາກ-ເລນິນ, ມີທັດສະນະຫຼັກໝັ້ນ, ການເມືອງທີ່ໜັກແໜ້ນ, ມີຄຸນສົມບັດສົນທຳປະຕິວັດ, ສາມາດຮອງຮັບກັບໜ້າທີ່ການເມືອງໃນໄລຍະໃໝ່ ຂອງເງື່ອນໄຂແຫ່ງການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ໃນປັດຈຸບັນ, ຄະນະພັກສະພາແຫ່ງຊາດ ຈຶ່ງໄດ້ຕົກລົງຈັດຕັ້ງຊຸດຮຽນທິດສະດີການເມືອງຂັ້ນຕົ້ນ ຊຸດທີ I ຂຶ້ນ ເຊິ່ງບັນດາສະຫາຍສະມາຊິກພັກ-ພະນັກງານຫຼັກແຫຼ່ງ ຂອງສະພາແຫ່ງຊາດ ທີ່ໄດ້ຮັບການເລືອກເຟັ້ນຈາກບັນດາໜ່ວຍພັກຮາກຖານ ຂອງສະພາແຫ່ງຊາດ ຈະໄດ້ພ້ອມກັນສຸມສະຕິປັນຍາ, ຍົກສູງຄວາມຮັບຜິດຊອບຂອງຕົນ ໃນການຮັບເອົາຄວາມຮູ້ນຳບັນດາຄູອາຈານ, ມີການສົນທະນາຄົ້ນຄວ້າຢ່າງເລິກເຊິ່ງ ເພື່ອໃຫ້ເຂົ້າໃຈບັນດາເນື້ອໃນທີ່ມີໃນຫຼັກສູດການຝຶກອົບຮົມຄັ້ງນີ້ ແລະ ເຊື່ອໝັ້ນວ່າພາຍຫຼັງຮຽນຈົບຊຸດຝຶກອົບຮົມນີ້ແລ້ວ ບັນດາສະຫາຍຈະສ້າງໃຫ້ມີການປ່ຽນແປງຢ່າງຕັ້ງໜ້າໃນການປະຕິບັດໜ້າທີ່ການເມືອງຂອງຕົນ, ຄຸນນະພາບ ແລະ ຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານກໍຈະສູງຂຶ້ນ, ທັດສະນະຫຼັກໝັ້ນການເມືອງ, ແບບແຜນວິທີເຮັດວຽກ ແລະ ແບບແຜນການດຳລົງຊີວິດ ຈະໄດ້ຮັບການປັບປຸງດີຂຶ້ນ, ສາມາດເປັນກຳລັງແຮງອັນເຂັ້ມແຂງໃຫ້ແກ່ຄະນະພັກ, ຄະນະປະຈຳ ກໍຄືໃຫ້ແກ່ສະພາແຫ່ງຊາດ.

ໃນຊຸດຝຶກອົບຮົມທິດສະດີການເມືອງ ຊຸດທີ I ຄັ້ງນີ້ ບັນດານັກເຝິກຮົມຈະໄດ້ຄົ້ນຄວ້າຮ່ຳຮຽນ 6 ກຸ່ມວິຊາ ຄື: ກຸ່ມວິຊາປັດຊະຍາມາກ-ເລນິນ, ກຸ່ມວິຊາເສດຖະສາດການເມືອງມາກ-ເລນິນ, ກຸ່ມວິຊາລັດທິສັງຄົມນິຍົມວິທະຍາສາດ, ກຸ່ມວິຊາ ແນວຄິດ ໄກສອນ ພົມວິຫານ, ກຸ່ມວິຊາທິດສະດີລັດ ແລະ ກົດໝາຍ, ກຸ່ມວິຊາ ປະຫວັດສາດພັກ ແລະ ກໍ່ສ້າງພັກ.

(ນາງ ສຸພາວັນ ທອມສະນິດ)



## ຮອງປະທານ...

(ຕໍ່ຈາກໜ້າ 1)

(ສພຊ) ວັນທີ 24 ກຸມພາ 2023 ທີ່ສະພາແຫ່ງຊາດ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງທ່ານ ນາງ ເອີນຊີໄຊຄັງ ລົບຊັງດໍຣຈ (L.Ulziisaikhan) ເລຂາທິການໃຫຍ່ ສະພາຄູຣານໃຫຍ່ ແຫ່ງມົງໂກລີ ພ້ອມດ້ວຍຄະນະ ເນື່ອງໃນໂອກາດທີ່ຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ໃນລະຫວ່າງວັນທີ 23 ກຸມພາ ຫາ 1 ມີນາ 2023.

ໃນໂອກາດດັ່ງກ່າວ, ທ່ານ ປອ. ນາງສູນທອນ ໄຊຍະຈັກ ໄດ້ສະແດງຄວາມຕ້ອນຮັບຢ່າງອົບອຸ່ນຕໍ່ທ່ານ ນາງ ເອີນຊີໄຊຄັງ ລົບຊັງດໍຣຈ ທີ່ມາຢ້ຽມຢາມ ສປປລາວ ຢ່າງເປັນທາງການ, ພ້ອມທັງຕີລາຄາສູງຕໍ່ການຢ້ຽມຢາມໃນຄັ້ງນີ້ ເຊິ່ງເປັນການເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ການຮ່ວມມືທີ່ດີ ລະຫວ່າງ ປະຊາຊົນສອງຊາດ ລາວ-ມົງໂກລີ ກໍຄືລະຫວ່າງສອງອົງການນິຕິບັນຍັດ ຂອງສອງປະເທດ ເວົ້າລວມ, ເວົ້າສະເພາະ ລະຫວ່າງຄະນະເລຂາທິການສະພາແຫ່ງຊາດລາວ ແລະ ຫ້ອງວ່າການສະພາຄູຣານໃຫຍ່ ແຫ່ງ ມົງໂກລີ ແລະ ພ້ອມກັນນີ້, ທ່ານຮອງປະທານສະພາແຫ່ງຊາດ ໄດ້ສະແດງຄວາມຂອບໃຈຕໍ່ຫ້ອງວ່າການ ກໍຄື ສະພາຄູຣານໃຫຍ່ ມົງໂກລີ ທີ່ໄດ້ຕົກລົງໃຫ້ການຊ່ວຍເຫຼືອຜ້າພົມປູຫ້ອງຮັບແຂກກຽດຕິຍົດຂອງສະພາແຫ່ງຊາດ ແລະ ສະແດງຄວາມຊົມເຊີຍຕໍ່ຜົນການພົບປະເຮັດວຽກ ລະຫວ່າງເລຂາທິການສະພາແຫ່ງຊາດລາວ ແລະຫ້ອງວ່າການສະພາຄູຣານໃຫຍ່ມົງໂກລີ ເຊິ່ງສອງຝ່າຍໄດ້ທົບທວນຕີລາຄາຄືນການພົວພັນຮ່ວມມືໃນໄລຍະຜ່ານມາ ແລະ ກຳນົດທິດທາງແຜນການຮ່ວມມືໃນຕໍ່ໜ້າ ໂດຍໄດ້ຮ່ວມກັນລົງນາມ ໃນບົດບັນທຶກຊ່ວຍຈຳ ວ່າດ້ວຍການຮ່ວມມື ລະຫວ່າງຄະນະເລຂາທິການ ສະພາແຫ່ງຊາດລາວ ແລະ ຫ້ອງວ່າການສະພາຄູຣານໃຫຍ່ ມົງໂກລີ ໄລຍະ 2023-2026 ເຊິ່ງເປັນເອກະສານທາງດ້ານນິຕິກຳ ສຳຄັນ ເພື່ອຊຸກຍູ້ ແລະ ສົ່ງເສີມການພົວພັນຮ່ວມມື ລະຫວ່າງ 2 ຫ້ອງວ່າການ ກໍຄື 2 ອົງການນິຕິບັນຍັດ ຂອງ 2 ປະເທດ ສປປລາວ ແລະ ມົງໂກລີ ເພື່ອຍົກສູງການພົວພັນຮ່ວມມື, ທ່ານຮອງປະທານສະພາແຫ່ງຊາດ ໄດ້ສະເໜີໃຫ້ສອງຝ່າຍ ຈັດຕັ້ງປະຕິບັດບົດບັນທຶກຊ່ວຍຈຳວ່າດ້ວຍການຮ່ວມມື ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ເປັນຕົ້ນແມ່ນການແລກປ່ຽນຄະນະຜູ້ແທນຂັ້ນຕ່າງໆ, ແລກປ່ຽນບົດຮຽນກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດຂອງອົງການນິຕິບັນຍັດ, ດ້ານຂໍ້ມູນຂ່າວສານ, ການສະໜັບສະໜູນ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.

ທ່ານ ນາງ ເອີນຊີໄຊຄັງ ລົບຊັງດໍຣຈ ໄດ້ກ່າວສະແດງຄວາມຂອບໃຈ ຕໍ່ທ່ານຮອງປະທານສະພາແຫ່ງຊາດ ແຫ່ງ ສປປລາວ ທີ່ໄດ້ສະຫຼະເວລາອັນມີຄ່າຕ້ອນຮັບຄະນະຢ່າງອົບອຸ່ນ ແລະ ໄດ້ລາຍງານຜົນຂອງການພົບປະເຮັດວຽກຮ່ວມກັບທ່ານ ນາງ ປິ່ງຄຳ ລາຊະສິມມາ ເລຂາທິການສະພາແຫ່ງຊາດ ແຫ່ງ ສປປລາວ ພ້ອມທັງສະເໜີຈຸດປະສົງການເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ ຂອງຄະນະໃນຄັ້ງນີ້.

ກ່ອນໜ້ານີ້, ໃນຕອນເຊົ້າຂອງວັນດຽວກັນ, ທ່ານ ນາງ ເອີນຊີໄຊຄັງ ລົບຊັງດໍຣຈ ພ້ອມດ້ວຍຄະນະ ໄດ້ພົບປະເຮັດວຽກຮ່ວມກັບທ່ານ ນາງ ປິ່ງຄຳ ລາຊະສິມມາ ເລຂາທິການສະພາແຫ່ງຊາດລາວ, ສອງຝ່າຍໄດ້ແຈ້ງສະພາບໂດຍຫຍໍ້ຂອງແຕ່ລະປະເທດ, ສະພາແຫ່ງຊາດ ກໍຄື ກົງຈັກການຈັດຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງ 2 ຫ້ອງວ່າການສະພາແຫ່ງຊາດ ລາວ ແລະ ມົງໂກລີ ແລະ ສົນທະນາແລກປ່ຽນບາງບັນຫາສຳຄັນທີ່ຕ່າງຝ່າຍຕ່າງໃຫ້ຄວາມສົນໃຈ, ພ້ອມທັງໄດ້ຮ່ວມກັນລົງນາມໃນບົດບັນທຶກຊ່ວຍຈຳວ່າດ້ວຍການຮ່ວມມື (MOU) ລະຫວ່າງ ຄະນະເລຂາທິການສະພາແຫ່ງຊາດ ແຫ່ງ ສປປລາວ ແລະ ຫ້ອງວ່າການສະພາຄູຣານໃຫຍ່ ແຫ່ງ ມົງໂກລີ ເພື່ອເປັນບ່ອນອີງສຳຄັນທາງດ້ານນິຕິກຳໃນການປະກອບສ່ວນເສີມສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນເປັນມູນເຊື້ອ ລະຫວ່າງ ສອງປະເທດ ລາວ-ມົງໂກລີ ໃຫ້ສືບຕໍ່ຂະຫຍາຍຕົວ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ.

ນອກຈາກນີ້, ທ່ານນາງ ເອີນຊີໄຊຄັງ ລົບຊັງດໍຣຈ ແລະ ຄະນະ ຍັງຈະໄດ້ສືບຕໍ່ ພົບປະເຮັດວຽກຮ່ວມກັບເລຂາທິການສະພາປະຊາຊົນນະຄອນຫຼວງວຽງຈັນ, ເລຂາທິການສະພາປະຊາຊົນແຂວງຫຼວງພະບາງ, ຢ້ຽມຂ່ຳນັບທ່ານປະທານສະພາປະຊາຊົນແຂວງຫຼວງພະບາງ ແລະ ຢ້ຽມຊົມສະຖານທີ່ທ່ອງທ່ຽວທາງດ້ານວັດທະນະທຳ ແລະ ທຳມະຊາດ ແລະ ສະຖານທີ່ຜະລິດເຄື່ອງຫັດຖະກຳຈຳນວນໜຶ່ງ ຢູ່ນະຄອນຫຼວງວຽງຈັນ ແຂວງຫຼວງພະບາງ ແລະ ເມືອງວັງວຽງ ແຂວງວຽງຈັນ.

(ສອນສັກ ວັນວິໄຊ)

## ສຳເລັດ...

(ຕໍ່ຈາກໜ້າ 1)

ນາມ ເພື່ອເປັນການຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງພັກ-ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ, ຫວຽດນາມ-ລາວ ເວົ້າລວມ, ເວົ້າສະເພາະລະຫວ່າງສອງສະພາແຫ່ງຊາດລາວ-ຫວຽດນາມ; ພ້ອມທັງເປັນການແລກປ່ຽນບົດຮຽນກ່ຽວກັບວຽກງານສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ກັບສະພາແຫ່ງຊາດ ສສ.ຫວຽດນາມ ເຊິ່ງເປັນຜູ້ທີ່ມີບົດຮຽນ ແລະ ພຶດຕິກຳຕົວຈິງໃນການຈັດຕັ້ງປະຕິບັດຜ່ານມາຫຼາຍແລ້ວ ເພື່ອນຳມາປັບປຸງໃນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງຂອງ ສປປລາວ.

ການເຄື່ອນໄຫວຢູ່ ສສ.ຫວຽດນາມ ຄະນະຜູ້ແທນຝ່າຍລາວ ນຳໂດຍສະຫາຍ ຄຳໃບ ດຳລັດ ໄດ້ພົບປະເຮັດວຽກກັບຄະນະຜູ້ແທນສະພາປະຊາຊົນແຂວງກວາງນາມ ເຊິ່ງນຳໂດຍສະຫາຍ ຟານ ຫວຽດ ເກື່ອງ ກຳມະການສູນກາງພັກ, ເລຂາພັກແຂວງ, ປະທານສະພາປະຊາຊົນແຂວງກວາງນາມ; ພົບປະ ແລະ ເຮັດວຽກກັບຄະນະສະມາຊິກສະພາປະຊາຊົນນະຄອນດານັງ ນຳໂດຍສະຫາຍ ເລື່ອງ ຫງວຽນ ມິ່ງ ຈຽດ ກຳມະການສຳຮອງສູນກາງພັກ, ຮອງເລຂາຜູ້ປະຈຳການຄະນະພັກນະຄອນ, ປະທານສະພາປະຊາຊົນນະຄອນດານັງ; ພົບປະ ແລະ ເຮັດວຽກກັບຄະນະສະມາຊິກສະພາປະຊາຊົນນະຄອນຫຼວງຮ່າໂນ້ຍ ສສ.ຫວຽດນາມ ເຊິ່ງນຳໂດຍສະຫາຍ ຫງວຽນ ງອກ ຕວນ ຮອງເລຂາຄະນະພັກນະຄອນ, ປະທານສະພາປະຊາຊົນນະຄອນຫລວງຮ່າໂນ້ຍ. ເຊິ່ງຝ່າຍລາວ ແລະຫວຽດນາມ ໄດ້ແລກປ່ຽນບົດຮຽນນຳກັນ ເປັນຕົ້ນ: ວຽກງານກົງຈັກຂອງສະພາປະຊາຊົນຂັ້ນແຂວງຂອງ ສສ.ຫວຽດນາມ; ວຽກງານການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງຂອງ ສສ.ຫວຽດນາມ; ການປະເມີນຜົນຕໍ່ການປະຕິບັດໜ້າທີ່ບຸກຄະລາກອນດຳລົງຕຳແໜ່ງ ທີ່ສະພາແຫ່ງຊາດເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ; ການປະເມີນຜົນຕໍ່ຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ຂອງສະມາຊິກສະພາແຫ່ງຊາດ; ການປະເມີນນະໂຍບາຍຕໍ່ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ; ພ້ອມທັງສົນທະນາ, ແລກປ່ຽນບົດຮຽນປະສົບການ ແລະ ຕອບຄຳຊັກຖາມຕໍ່ບັນຫາຕ່າງໆທີ່ຝ່າຍລາວມີຄວາມສົນໃຈ.

ໃນໂອກາດນີ້, ສະຫາຍ ຄຳໃບ ດຳລັດ ພ້ອມດ້ວຍຄະນະ ໄດ້ພົບປະສອງຝ່າຍກັບສະຫາຍ ຫງວຽນ ຄາກ ດິ່ງ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ພ້ອມດ້ວຍຄະນະ ທີ່ສະພາແຫ່ງຊາດ ສສ.ຫວຽດນາມ; ໃນການພົບປະສະຫາຍ ຮອງປະທານສະພາແຫ່ງຊາດລາວ ໄດ້ມີຄຳເຫັນວ່າ: ການຢ້ຽມຢາມຄັ້ງນີ້, ເປັນການຜັນຂະຫຍາຍຜົນການຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປລາວ ຂອງສະຫາຍປະທານສະພາແຫ່ງຊາດຫວຽດນາມ ໃນເດືອນພຶດສະພາ 2022 ທີ່ຜ່ານມາ, ທັງເປັນການປະຕິບັດບົດບັນທຶກການຮ່ວມມື ລະຫວ່າງ ສອງສະພາແຫ່ງຊາດພວກເຮົາ ໃນການແລກປ່ຽນບົດຮຽນເຊິ່ງກັນແລະກັນ. ພ້ອມນີ້, ຍັງເປັນການເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ເວົ້າລວມ, ເວົ້າສະເພາະ ລະຫວ່າງ ສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດຫວຽດນາມ ໃຫ້ນັບມື້ນັບກ້າວເຂົ້າສູ່ລວງເລິກ ແລະ ເປັນຮູບປະທຳຂຶ້ນເທື່ອລະກ້າວ. ສຳລັບວຽກທີ່ສົນທະນາ ແລະ ແລກປ່ຽນນຳກັນ ແມ່ນລົງເລິກກ່ຽວກັບລະບົບກົງຈັກການຈັດຕັ້ງ, ບຸກຄະລາກອນ, ການປະເມີນບຸກຄະລາກອນທີ່ສະພາເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ, ຜ່ານການຄົ້ນຄວ້ານຳກັນ ແມ່ນມີບັນຍາກາດດີ, ບັນດາສະຫາຍໄດ້ລາຍງານດ້ວຍຄວາມຈິງໃຈ; ສຳລັບທິດທາງຮ່ວມມື ໃນຕໍ່ໜ້າແມ່ນຈະໄດ້ສືບຕໍ່ແລກປ່ຽນບົດຮຽນເຊິ່ງກັນແລະກັນ, ປະຕິບັດບົດບັນທຶກ ຂອງສອງສະພາແຫ່ງຊາດທີ່ລົງນາມຮ່ວມກັນ; ເພີ່ມທະວີການຊຸກຍູ້ການສ້າງຊັບພະຍາກອນມະນຸດ, ສ້າງພະນັກງານ ກໍຄືຝຶກອົບຮົມຊ່ວຍສະພາທ້ອງຖິ່ນຂອງລາວໃຫ້ຫລາຍຂຶ້ນ; ຊຸກຍູ້ ແລະ ສ້າງເງື່ອນໄຂ ໃຫ້ສະພາປະຊາຊົນຂັ້ນທ້ອງຖິ່ນ ໂດຍສະເພາະບັນດາແຂວງທີ່ມີຊາຍແດນຕິດຈອດໄດ້ມີການພົບປະ, ແລກປ່ຽນບົດຮຽນ ແລະ ໄປມາຫາສູ່ເຊິ່ງກັນແລະກັນ.

ຈາກນັ້ນ, ສະຫາຍຮອງປະທານສະພາແຫ່ງຊາດລາວ ພ້ອມດ້ວຍຄະນະ ຍັງໄດ້ເຂົ້າຢ້ຽມຂ່ຳນັບສະຫາຍ ເວືອງ ດິງເຫວະ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ເຊິ່ງສະຫາຍໄດ້ສະແດງຄວາມຕ້ອນຢ່າງອົບອຸ່ນ ແລະ ຊົມເຊີຍຕໍ່ຜົນສຳເລັດໃນການເຄື່ອນໄຫວເຮັດວຽກຢູ່ ສສ.ຫວຽດນາມ ຂອງສະຫາຍຮອງປະທານສະພາແຫ່ງຊາດລາວ ແລະ ຄະນະໃນຄັ້ງນີ້, ພ້ອມທັງອວຍພອນໃຫ້ສາຍພົວພັນມິດຕະພາບອັນສະຫງ່າ, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນ ສອງຊາດ ຫວຽດນາມ-ລາວ ຈົ່ງໝັ້ນຄົງຂະໜົງແກ່ນຕະຫລອດການະນານ.

ກ່ອນໜ້ານີ້, ຄະນະຜູ້ແທນສະພາແຫ່ງຊາດລາວ ຍັງໄດ້ພົບປະເຮັດວຽກກັບສະຫາຍ ນາງ ຫງວຽນ ທິ ແທງ ກຳມະການສູນກາງພັກ, ຫົວໜ້າຄະນະວຽກງານສະມາຊິກສະພາແຫ່ງຊາດຫວຽດນາມ ພ້ອມດ້ວຍຄະນະ ເຊິ່ງທັງສອງຝ່າຍໄດ້ແລກປ່ຽນບົດຮຽນກ່ຽວກັບວຽກງານກົງຈັກຂອງສະພາປະຊາຊົນຂັ້ນແຂວງ; ວຽກງານການເລືອກຕັ້ງ; ການປະເມີນຜົນຕໍ່ການປະຕິບັດໜ້າທີ່ບຸກຄະລາກອນດຳລົງຕຳແໜ່ງ ທີ່ສະພາແຫ່ງຊາດເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ; ການປະເມີນຜົນຕໍ່ຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ຂອງສະມາຊິກສະພາແຫ່ງຊາດ; ການປະເມີນນະໂຍບາຍຕໍ່ສະມາຊິກສະພາແຫ່ງຊາດ. ພ້ອມນັ້ນ, ທັງສອງຝ່າຍຍັງໄດ້ຖາມ-ຕອບແລກປ່ຽນຄຳຄິດຄຳເຫັນໃນບັນດາຫົວຂໍ້ທີ່ມີຄວາມສົນໃຈ.

ໃນການເຄື່ອນໄຫວເຮັດວຽກຢູ່ ສສ.ຫວຽດນາມຄັ້ງນີ້, ຄະນະຜູ້ແທນສະພາແຫ່ງຊາດລາວຍັງໄດ້ຮັບການຕ້ອນຮັບ ແລະ ພົບປະສົນທະນາກັບສະຫາຍ ນາງ ຫງວຽນ ທິ ຕຽນ ກຳມະການສູນກາງພັກ, ຮອງເລຂາຜູ້ປະຈຳການຄະນະພັກນະຄອນຫຼວງຮ່າໂນ້ຍ ພ້ອມດ້ວຍຄະນະ, ແລະ ໄດ້ຢ້ຽມຢາມສະຖານທີ່ທ່ອງທ່ຽວ, ຢ້ຽມຢາມພື້ນຖານເສດຖະກິດຈຳນວນໜຶ່ງຂອງແຂວງກວາງນາມ, ນະຄອນດານັງ ແລະ ນະຄອນຫຼວງຮ່າໂນ້ຍຕື່ມອີກ.

(ກົງທະນູຄຳ ພິພັດເສລີ)

# ກອງປະຊຸມປະຈຳປີຂອງ ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 1



(ສພຊ) ໃນຕອນເຊົ້າ ຂອງວັນທີ 14 ກຸມພາ 2023 ຄະນະສະມາຊິກສະພາແຫ່ງຊາດ ຊຸດທີ IX ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ຊຸດທີ II ໄດ້ດຳເນີນກອງປະຊຸມປະຈຳປີຂອງຕົນ ພາຍໃຕ້ການເປັນປະທານຂອງທ່ານ ອານຸພາບ ຕຸນາລົມ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ເຂົ້າຮ່ວມໂດຍທ່ານ ອາດສະພັງທອງ ເຈົ້າຄອງນະຄອນຫຼວງວຽງຈັນ, ບັນດາທ່ານຮອງລັດຖະມົນຕີ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1, ການນຳນະຄອນຫຼວງ, ທ່ານສະມາຊິກສະພາປະຊາຊົນນະຄອນຫຼວງ ພ້ອມດ້ວຍແຂກທີ່ຖືກເຊີນ ແລະ ພະນັກງານພາຍໃນສະພາປະຊາຊົນນະຄອນຫຼວງວຽງຈັນ.

ກອງປະຊຸມໄດ້ຮັບຟັງການລາຍງານສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ເຊິ່ງໄລຍະ 1 ປີ ຜ່ານມາ ໄດ້ເອົາໃຈໃສ່ປະກອບຄຳເຫັນໃນການສ້າງ ແລະ ປັບປຸງບັນດາກົດໝາຍຂອງສະພາແຫ່ງຊາດ ໃນກອງປະຊຸມສະໄໝສາມັນເທື່ອທີ 3 ແລະ ເທື່ອທີ 4 ທັງໝົດ 16 ສະບັບ ໃນນັ້ນ, ກົດໝາຍສ້າງໃໝ່ 7 ສະບັບ ໄດ້ສົມທົບກັບສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸກຍູ້ອົງການປົກຄອງນະຄອນຫຼວງ ແລະ ພາກສ່ວນກ່ຽວຂ້ອງກະກຽມຮ່າງນິຕິກຳ ຈຳນວນ 4 ສະບັບ ນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນນະຄອນຫຼວງ ແລະ ໄດ້ດຳເນີນການປະເມີນການຈັດຕັ້ງປະຕິບັດນິຕິກຳຂອງນະຄອນຫຼວງ ຈຳນວນ 2 ສະບັບ. ນອກຈາກນັ້ນ, ໄລຍະຜ່ານມາ ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນນະຄອນຫຼວງ ຍັງໄດ້ນຳເອົາຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2 ແລະ ເທື່ອທີ 3 ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ ໄປເຜີຍແຜ່ໃຫ້ຜູ້ມີສິດເລືອກຕັ້ງຮັບຊາບ ໄດ້ທັງໝົດ 310 ຈຸດ ໃນນັ້ນ, ຂັ້ນບ້ານມີ 261 ຈຸດ, ຂັ້ນເມືອງມີ 9 ຈຸດ, ຂັ້ນພະແນກການ, ຂັ້ນສູນກາງ, ກົມກອງ ແລະ ພາກສ່ວນເອກະຊົນ 31 ຈຸດ ມີຜູ້ເຂົ້າຮ່ວມຮັບຟັງທັງໝົດ 27.695 ຄົນ ຍິງ 11.883 ຄົນ ແລະ ສາມາດເກັບກຳຄຳສະເໜີຂອງປະຊາຊົນ ທັງໝົດ 512 ຂໍ້ ໃນນີ້, ຂັ້ນນະຄອນຫຼວງ 372 ຂໍ້ ແລະ ຂັ້ນສູນກາງ 140 ຂໍ້, ເຊິ່ງຄຳສະເໜີທັງໝົດໄດ້ນຳສົ່ງໃຫ້ພາກສ່ວນກ່ຽວຂ້ອງພິຈາລະນາແກ້ໄຂ. ມາເຖິງປັດຈຸບັນ ໄດ້ຮັບການຊີ້ແຈງເປັນລາຍລັກອັກສອນຈາກພາກກ່ຽວຂ້ອງ ທັງໝົດ 22 ພາກສ່ວນ, ມີ 233 ຂໍ້ ເຊິ່ງຄຳຊີ້ແຈງດັ່ງກ່າວຈະໄດ້ນຳສົ່ງໃຫ້ຄະນະສະມາຊິກສະພາສະພາປະຊາຊົນນະຄອນຫຼວງ ປະຈຳເຂດເລືອກຕັ້ງເມືອງ ເພື່ອນຳໄປເຜີຍແຜ່ໃຫ້ປະຊາຊົນທີ່ຢູ່ພາຍໃນເມືອງຂອງຕົນຮັບຊາບ ພ້ອມທັງມີແຜນເຜີຍແຜ່ຄຳຊີ້ແຈງດັ່ງກ່າວຜ່ານສື່ມວນຊົນ.

ກອງປະຊຸມໄດ້ເຊີນບັນດາກະຊວງທີ່ກ່ຽວຂ້ອງມາລາຍງານຕໍ່ບາງວຽກງານທີ່ຂຶ້ນກັບການຄຸ້ມຄອງຂອງຂັ້ນສູນກາງມາຈັດຕັ້ງປະຕິບັດຢູ່ນະຄອນຫຼວງວຽງຈັນ ເປັນຕົ້ນແມ່ນການຄຸ້ມຄອງ ແລະ ມາດຕະການແກ້ໄຂການລັກລອບຂຸດຄົ້ນແຮ່ທາດ ຢູ່ລະຫວ່າງຊາຍແດນ ເມືອງສັງທອງ ນະຄອນຫຼວງວຽງຈັນ ແລະ ເມືອງເຟືອງ ແຂວງວຽງຈັນ ເພື່ອເປັນການຮັບຊາບຂໍ້ມູນ ແລະ ຕິດຕາມກວດກາ, ບັນດາທ່ານສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ໄດ້ເຈາະຈີ້ມ ແລະ ສະເໜີແນະກ່ຽວກັບວິທີການ ແລະ ມາດຕະການແກ້ໄຂໃນຕໍ່ໜ້າ.

# ພົບປະຜູ້ມີສິດເລືອກຕັ້ງ ອ້ອມຂ້າງແຂວງອຸດົມໄຊ



(ສພຊ) ໃນລະຫວ່າງວັນທີ 16-17 ກຸມພາ 2023 ນຳໂດຍທ່ານ ຄຳດີ ວົງລ້ອມ ສະມາຊິກສະພາແຫ່ງຊາດ ຊຸດທີ IX ປະຈຳເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ, ປະທານສະພາປະຊາຊົນແຂວງ; ບັນດາທ່ານສະພາປະຊາຊົນແຂວງ ຊຸດທີ II ປະຈຳເຂດເລືອກຕັ້ງເມືອງໄຊ ແລະ ບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງຢູ່ອ້ອມຂ້າງແຂວງອຸດົມໄຊ, ມີບັນດາທ່ານຄະນະພັກ, ຄະນະກອງບັນຊາການປ້ອງກັນຊາດ-ປ້ອງກັນຄວາມສະຫງົບແຂວງ, ໂຮງຮຽນການເມືອງ ແລະ ການປົກຄອງແຂວງ, ໂຮງຮຽນປ້ອງກັນຄວາມສະຫງົບເລກ 1 ພ້ອມທັງພະນັກງານກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບແຂວງ, ຄູອາຈານ ແລະ ນັກສຶກສາ ໂຮງຮຽນວິຊາຊີບ, ສູນພັດທະນາສີມືແຮງງານ ເຂົ້າຮ່ວມທັງໝົດ 896 ທ່ານ ຍິງ 249 ທ່ານ.

ບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ຊຸດທີ II ປະຈຳເຂດເລືອກຕັ້ງເມືອງໄຊ ໄດ້ຜັດປ່ຽນກັນນຳເອົາເນື້ອໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ຂອງສະພາສະພາປະຊາຊົນແຂວງ ຊຸດທີ II ເຜີຍແຜ່ໃຫ້ຜູ້ເຂົ້າຮ່ວມໄດ້ຮັບຟັງ, ເພື່ອໃຫ້ຮັບຮູ້ ແລະ ເຂົ້າໃຈວ່າ 2 ກອງປະຊຸມດັ່ງກ່າວ ໄດ້ພິຈາລະນາຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ຂອງແຂວງ ເປັນຕົ້ນແມ່ນກອງປະຊຸມໄດ້ຮັບຮອງເອົາບົດລາຍງານຂອງລັດຖະບານກ່ຽວກັບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ປີ 2021; ການຈັດຕັ້ງປະຕິບັດແຜນງົບປະມານ ປີ 2022 ແລະ ທິດທາງການສ້າງແຜນງົບປະມານແຫ່ງລັດ ປີ 2023; ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2022 ແລະ ແຜນການປະຈຳປີ 2023; ຮັບຮອງເອົາການແຕ່ງຕັ້ງທ່ານ ສອນໄຊ ສີພັນດອນ ເປັນນາຍົກລັດຖະມົນຕີ ແຫ່ງ ສປປລາວ ຜູ້ໃໝ່ ແລະ ກອງປະຊຸມໄດ້ພິຈາລະນາຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ, ພິຈາລະນາ ແລະ ຮັບຮອງເອົາການສ້າງນິຕິກຳຂອງອົງການປົກຄອງແຂວງຈຳນວນ 4 ສະບັບຄື: ຂໍ້ຕົກລົງວ່າດ້ວຍການນຳໃຊ້ນ້ຳ, ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ຢາປາບສັດຕູພືດ, ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງຄ່າທຳນຽມ ແລະ ຄ່າບໍລິການ, ຂໍ້ຕົກລົງວ່າດ້ວຍການໂຄສະນາ ເຜີຍແຜ່ນິຕິກຳ, ພິຈາລະນາ ແລະ ຮັບຮອງເອົາການສະເໜີແຕ່ງຕັ້ງຫົວໜ້າພະແນກ, ອົງການຈຳນວນໜຶ່ງ ແລະ ບັນຫາສຳຄັນອື່ນໆ.

ຜູ້ເຂົ້າຮ່ວມປະກອບໄດ້ຄຳຄິດເຫັນ ແລະ ຄຳສະເໜີຕ່າງໆ, ຕໍ່ກັບບັນຫາຄຳສະເໜີເຫຼົ່ານັ້ນ ບັນດາທ່ານສະມາຊິກສະພາແຫ່ງຊາດ, ສະພາປະຊາຊົນແຂວງ ໄດ້ຊີ້ແຈງກັບທີ່ແລ້ວ, ສ່ວນບາງບັນຫາທີ່ບໍ່ທັນກະຈ່າງແຈ້ງແມ່ນຈະໄດ້ນຳໄປຄົ້ນຄວ້າໃນກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ ແລະ ສົ່ງໃຫ້ພະແນກການ, ອົງການທີ່ກ່ຽວຂ້ອງຄົ້ນຄວ້າພິຈາລະນາ ແລະ ແກ້ໄຂ ບັນຫາດັ່ງກ່າວ ຕາມພາລະບົດບາດ.

(ແສງພອນ ອິນນະລົງ)

# ເຊື່ອມຊຶມຜົນສຳເລັດກອງປະຊຸມວຽກງານການເມືອງ-ແນວຄິດທົ່ວປະເທດ ຄັ້ງທີ V

(ສພຊ) ໃນຕອນເຊົ້າ ຂອງວັນທີ 16 ກຸມພາ 2023 ສະພາປະຊາຊົນແຂວງວຽງຈັນ ໄດ້ເຜີຍແຜ່ເຊື່ອມຊຶມຜົນສຳເລັດກອງປະຊຸມວຽກງານການເມືອງ-ແນວຄິດ ທົ່ວປະເທດ ຄັ້ງທີ V ໂດຍການເປັນປະທານຂອງທ່ານ ນາງ ຈັນທະຄອນ ສີອຳພອນ ຮອງປະທານສະພາປະຊາຊົນແຂວງວຽງຈັນ; ເຂົ້າຮ່ວມຮັບຟັງມີຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍສະມາຊິກພັກ, ພະນັກງານພາຍໃນສະພາປະຊາຊົນແຂວງວຽງຈັນເຂົ້າຮ່ວມຢ່າງພ້ອມພຽງ.



ກອງປະຊຸມໄດ້ນຳເອົາເອກະສານທີ່ສຳຄັນມາຈັດຕັ້ງເຊື່ອມຊຶມຄື: ເອກະສານບົດສະຫຼຸບຕີລາຄາສະພາບການຈັດຕັ້ງປະຕິບັດວຽກງານການເມືອງແນວຄິດ ໄລຍະແຕ່ປີ 2003-2022 ແລະ ທິດທາງຮອດປີ 2025; ເອກະສານມະຕິກອງປະຊຸມວຽກງານການເມືອງ-ແນວຄິດ ທົ່ວປະເທດ ຄັ້ງທີ V; ເອກະສານວ່າດ້ວຍການຍົກສູງຄຸນນະພາບວຽກງານການເມືອງ-ແນວຄິດ ໃນໄລຍະໃໝ່ ເຂົ້າໃນຊີວິດສັງຄົມຕົວຈິງ; ເອກະສານບົດຄຳເຫັນຊີ້ນຳ ແລະ ກ່າວປິດກອງຂອງສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ຕໍ່ກອງປະຊຸມວຽກງານການເມືອງ-ແນວຄິດທົ່ວປະເທດ ຄັ້ງທີ V.

ທັງນີ້, ກໍເພື່ອເຮັດໃຫ້ບັນດາສະມາຊິກພັກ, ພະນັກງານ-ລັດຖະກອນພາຍໃນສະພາປະຊາຊົນແຂວງ ໄດ້ຮັບຮູ້, ເຂົ້າໃຈ, ເຊື່ອມຊຶມກຳແໜ້ນວຽກງານການເມືອງ-ແນວຄິດ ຢູ່ໃນການຈັດຕັ້ງພັກທຸກຂັ້ນ ເຊິ່ງຕິດພັນກັບການດຳເນີນການປັບປຸງພາຍໃນຕໍ່ເນື່ອງ ໂດຍຖືເອົາການຕ້ານແນວຄິດຄອງເດີມ ທັດສະນະການເມືອງທີ່ຜິດເຂວ, ແບບແຜນນຳພາທີ່ບໍ່ຖືກຕ້ອງ ກໍຄືຄ່ານິຍົມທີ່ບໍ່ເໝາະສົມ ຢູ່ຖັນແຖວສະມາຊິກພັກ, ບົນພື້ນຖານດັ່ງກ່າວ ເພື່ອຍົກສູງນ້ຳໃຈຮັກຊາດ, ນ້ຳໃຈເສຍສະຫຼະເປັນເຈົ້າຕົນເອງ, ເສີມສ້າງຄວາມສາມັກຄີເປັນປຶກແຜ່ນ, ເພິ່ງຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ.

(ນາງ ບູລາຕີ ແສນທະວົງ)

# 3 ຄະນະກຳມະການ ສະພາປະຊາຊົນ ແຂວງຫົວພັນ ສຳເລັດກອງປະຊຸມ ປະຈຳປີ 2022




(ສພຊ) ປະຕິບັດຕາມກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງສະບັບເລກທີ 65/ຄປຈ, ລົງວັນທີ 10 ທັນວາ 2015, ມາດຕາ 73 ວ່າດ້ວຍກອງປະຊຸມຄົບຄະນະຂອງຄະນະກຳມະການ ສະພາປະຊາຊົນຂັ້ນແຂວງ; ວັນທີ 13 ກຸມພາ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຫົວພັນ ໄດ້ຈັດກອງປະຊຸມຄົບຄະນະ ປະຈຳປີ 2022 ຂອງ 3 ຄະນະກຳມະການສະພາປະຊາຊົນແຂວງຫົວພັນ ຊຸດທີ II ພາຍໃຕ້ການເປັນປະທານຂອງທ່ານ ນາງ ອຳໄພວອນ ລ້ອມບຸນແພງ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ, ປະທານສະພາປະຊາຊົນແຂວງ, ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ປະທານ-ຮອງປະທານຄະນະກຳມະການ, ສະມາຊິກສະພາປະຊາຊົນແຂວງ ທີ່ເປັນກຳມະການສັງກັດແຕ່ລະຄະນະກຳມະການ, ຄະນະເລຂາທິການ ສະພາປະຊາຊົນແຂວງ, ບັນດາພະແນກການ, ອົງການທຽບເທົ່າຂັ້ນແຂວງ, ກອງບັນຊາການ ປກຊ-ປກສ, ອົງການຈັດຕັ້ງມະຫາຊົນ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ບັນດາສາຂາທະນາຄານ ແລະ ພະນັກງານວິຊາການ ທັງ 3 ຄະນະກຳມະການ ສະພາປະຊາຊົນແຂວງ ເຂົ້າຮ່ວມ.

ກອງປະຊຸມໃນຄັ້ງນີ້, ເປັນການສະຫຼຸບຕີລາຄາຄືນກ່ຽວກັບການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານ ໃນ 1 ປີຜ່ານມາ ແລະ ວາງທິດທາງແຜນການໃນປີຕໍ່ໄປຂອງ 3 ຄະນະກຳມະການສະພາປະຊາຊົນແຂວງ ໃນນາມເປັນເສນາທິການໃຫ້ ຄະນະປະຈຳສະພາປະຊາຊົນແຂວງ ກໍຄືສະພາປະຊາຊົນແຂວງ ໃນການເຄື່ອນໄຫວຕາມ 3 ພາລະບົດບາດທີ່ໄດ້ກຳນົດໄວ້ໃນກົດໝາຍ, ກອງປະຊຸມໄດ້ຮັບຟັງການຜ່ານບົດສະຫຼຸບການເຄື່ອນວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຈາກ 3 ຄະນະກຳມະການ ຄື: ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ແລະ ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ສະພາປະຊາຊົນແຂວງຫົວພັນ. ຈາກນັ້ນ, ປະທານກອງປະຊຸມໄດ້ມີຄຳເຫັນເຈາະຈີ້ມ ຕໍ່ກັບບັນດາເນື້ອໃນ ຮ່າງບົດສະຫຼຸບຂອງແຕ່ລະຄະນະກຳມະການ ເພື່ອເປັນທິດໃຫ້ບັນດາທ່ານຜູ້ແທນເຂົ້າຮ່ວມກອງປະຊຸມໄດ້ປະກອບຄຳຄິດ, ຄຳເຫັນຢ່າງມີຈຸດສຸມຕໍ່ກັບຮ່າງບົດສະຫຼຸບ ເພື່ອເຮັດໃຫ້ເນື້ອໃນບົດສະຫຼຸບດັ່ງກ່າວມີເນື້ອໃນຄົບຖ້ວນ, ສົມບູນ, ຮັບປະກັນເຮັດໃຫ້ການຈັດຕັ້ງປະຕິບັດໜ້າທີ່ວຽກງານ ຖືກຕ້ອງສອດຄ່ອງກັບພາລະບົດບາດ, ສິດ ແລະ ໜ້າທີ່ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ໃນຕອນທ້າຍ, ປະທານກອງປະຊຸມ ຍັງໃຫ້ກຽດໂອ້ລົມ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງ ຕໍ່ 3 ຄະນະກຳມະການ ທີ່ຈັດຕັ້ງປະຕິບັດໄດ້ຮັບຜົນສຳເລັດຫຼາຍດ້ານ ຕະຫຼອດໃນໄລຍະ 1 ປີຜ່ານມາ ເຊິ່ງທ່ານໄດ້ຍົກໃຫ້ເຫັນ ດ້ານດີພົ້ນງານ, ດ້ານອ່ອນ, ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ ເພື່ອເປັນທິດໃນການສືບຕໍ່ກຳນົດທິດທາງແຜນການ ປະຈຳປີ 2023 ໃຫ້ມີຈຸດສຸມ, ຮັດກຸມ ສາມາດຈັດຕັ້ງປະຕິບັດໄດ້ ແລະ ມີຜົນສຳເລັດ. ພ້ອມນີ້, ທ່ານຍັງໄດ້ສະແດງຄວາມຊົມເຊີຍຕໍ່ບັນດາທ່ານເຂົ້າຮ່ວມກອງປະຊຸມທັງໝົດ ທີ່ມີຄວາມຈິງໃຈ, ເອົາໃຈໃສ່ ໃນການປະກອບຄຳຄິດ, ຄຳເຫັນຕໍ່ຮ່າງບົດສະຫຼຸບຂອງ 3 ຄະນະກຳມະການ ດ້ວຍຄວາມຮັບຜິດຊອບສູງຕໍ່ໜ້າທີ່ການເມືອງຕາມການມອບໝາຍ ໂດຍສະເພາະແມ່ນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ໃນການເປັນເສນາທິການໃຫ້ແກ່ຄະນະປະຈຳສະພາປະຊາຊົນແຂວງ ກໍຄືສະພາປະຊາຊົນແຂວງ. ຈາກນັ້ນ, ທ່ານໄດ້ເນັ້ນໜັກ ແລະ ຮຽກຮ້ອງມາຍັງ 3 ຄະນະກຳມະການ ກໍຄືບັນດາທ່ານສະມາຊິກສະພາປະຊາຊົນແຂວງທີ່ເປັນກຳມະການຂອງຄະນະກຳມະການ ຕ້ອງໄດ້ສຸມໃສ່ຈັດຕັ້ງປະຕິບັດບັນດາເນື້ອໃນແຜນການທີ່ໄດ້ກຳນົດໄວ້ ໃຫ້ປະກົດຜົນເປັນຈິງ ໂດຍສະເພາະແມ່ນສຸມໃສ່ເຄື່ອນໄຫວຈັດຕັ້ງປະຕິບັດຕາມ 3 ພາລະບົດບາດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ກໍຄືມະຕິຂອງສະພາປະຊາຊົນແຂວງ ທີ່ໄດ້ຮັບຮອງໄປແລ້ວນັ້ນ. ພ້ອມກັນນັ້ນ, ກໍຕ້ອງມີການປະສານສົມທົບຢ່າງກົມກຽວກັບອົງການປົກຄອງແຂວງ ແລະ ພາກສ່ວນກ່ຽວຂ້ອງ ກໍຄືການປະສານງານພາຍໃນຄະນະກຳມະການ ໃນການສັງລວມ, ເກັບກຳຂໍ້ມູນ ແລະ ການສະຫຼຸບສ່ອງແສງລາຍງານຢ່າງເປັນປົກກະຕິ ເພື່ອພ້ອມກັນສູ້ຊົນຈັດຕັ້ງປະຕິບັດບັນດາຄາດໝາຍໃຫ້ບັນລຸຜົນສຳເລັດຕາມແຜນການວາງໄວ້.

(ວົງເວີນ ແກ້ວບຸນມີ)



# ສະຫຼຸບຕີລາຄາຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ 2016-2020



(ສພຊ) ກອງປະຊຸມສະຫຼຸບຕີລາຄາຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ 2016-2020 ແລະ ທິດທາງແຜນການ 2021-2025 ສະພາປະຊາຊົນແຂວງບໍລິຄຳໄຊ ໄດ້ຈັດຂຶ້ນໃນວັນທີ 3 ກຸມພາ 2023 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໂດຍການເປັນປະທານຂອງທ່ານ ສຸວັນນີ ໄຊຊະນະ ປະທານສະພາປະຊາຊົນແຂວງ; ມີບັນດາຄະນະຊີ້ນຳວຽກງານຂັ້ນແຂວງ, ຕາງໜ້າພະແນກການ ພ້ອມດ້ວຍສະມາຊິກພັກ, ພະນັກງານພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ໃນພິທີ, ປະທານກອງປະຊຸມໄດ້ເຜີຍແຜ່ເອກະສານທີ່ສຳຄັນຕ່າງໆຂອງພັກ ເປັນຕົ້ນແມ່ນມະຕິເລກທີ 01/ກມສພ, ລົງວັນທີ 7 ມັງກອນ 2010 ວ່າດ້ວຍການເພີ່ມທະວີວຽກງານແຂ່ງຂັນຍ້ອງຍໍ ພາຍໃຕ້ຄຳຂວັນຮັກຊາດ ແລະ ພັດທະນາ ລັດຖະດຳລັດເລກທີ 011 ວ່າດ້ວຍການເປີດຂະບວນການແຂ່ງຂັນຍ້ອງຍໍໃນໄລຍະໃໝ່ ແລະ ດຳລັດເລກທີ 116 ວ່າດ້ວຍການເປີດຂະບວນການແຂ່ງຂັນຍ້ອງຍໍໃນໄລຍະໃໝ່ ແລະ ບົດສະຫຼຸບຕີລາຄາຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ 2016-2020 ແລະ ທິດທາງແຜນການ 2021-2025 ເຊິ່ງຕະຫຼອດໄລຍະ 5 ປີຜ່ານມາ ສະພາປະຊາຊົນແຂວງ ໄດ້ເອົາໃຈໃສ່ປະຕິບັດພາລະບົດບາດໃນການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ຜ່ານກົນໄກການດຳເນີນກອງປະຊຸມສະໄໝສາມັນ, ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ ໃນ 5 ປີຜ່ານມາ ສາມາດດຳເນີນກອງປະຊຸມຂອງຕົນໄດ້ 10 ຄັ້ງ; ບັນດາທ່ານສະມາຊິກສະພາປະຊາຊົນແຂວງ ໄດ້ເອົາໃຈໃສ່ປະຕິບັດໜ້າທີ່ການເມືອງຂອງຕົນດ້ວຍຄວາມຮັບຜິດຊອບ, ໄດ້ພິຈາລະນາ, ຮັບຮອງເອົາມະຕິກອງປະຊຸມ 50 ສະບັບ ເຊັ່ນ ຮັບຮອງເອົາກົງຈັກການຈັດຕັ້ງ ແລະ ບຸກຄະລາກອນຂອງອົງການປົກຄອງແຂວງ, ອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ, ຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ 5 ປີຂອງແຂວງ. ພ້ອມນີ້, ກໍໄດ້ຮັບຮອງເອົາການຍົກຍ້າຍ, ແຕ່ງຕັ້ງບຸກຄະລາກອນແຕ່ລະໄລຍະ ຕາມການສະເໜີຂອງທ່ານເຈົ້າແຂວງ ມີ 5 ຄັ້ງ, ຍົກຍ້າຍ 6 ຄົນ, ແຕ່ງຕັ້ງ 9 ຄົນ. ນອກຈາກນີ້, ປະທານສະພາປະຊາຊົນແຂວງ ພ້ອມດ້ວຍຄະນະ ຍັງໄດ້ເຄື່ອນໄຫວພົບປະຢ້ຽມຢາມພໍ່ແມ່ປະຊາຊົນ ໄດ້ຈຳນວນ 532 ຈຸດ, ສຳນັກເມືອງ 38 ຄັ້ງ, 25 ກົມກອງ, 5 ໂຮງຮຽນ ແລະ 6 ພະແນກການ, ມີ 458 ເທື່ອບ້ານ, ມີຜູ້ເຂົ້າຮ່ວມ 47.991 ຄົນ, ຍິງ 20.579 ຄົນ ກວມເອົາ 30.3% ຂອງຜູ້ມີສິດເລືອກຕັ້ງ ພ້ອມກັບການເຄື່ອນໄຫວດັ່ງກ່າວ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 11 ແລະ ສະມາຊິກສະພາປະຊາຊົນແຂວງ ໄດ້ລະດົມເຄື່ອງຊ່ວຍເຫຼືອຈາກສັງຄົມນຳໄປມອບໃຫ້ແກ່ປະຊາຊົນຜູ້ທຸກຍາກອານາຖາ, ຜູ້ທີ່ໄດ້ຮັບຜົນກະທົບຈາກໄພທຳມະຊາດ ປະກອບມີ: ຜ້າຫົ່ມ, ມຸ້ງ, ເສື້ອກັນໜາວ, ເຄື່ອງນຸ່ງຫົ່ມອື່ນໆ, ເຂົ້າສານ, ອາຫານສຳເລັດຮູບ, ນ້ຳດື່ມ ແລະ ອຸປະກອນກິລາ ລວມມູນຄ່າ 164.550.000 ກີບ.

ຜ່ານການສະຫຼຸບ, ຕີລາຄາ ແລະ ປະເມີນຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາໃນໄລຍະໄໝ 5 ປີ (2016-2020) ບັນດາສະມາຊິກພັກ-ພະນັກງານຂອງສະພາປະຊາຊົນແຂວງ ມີບຸກຄົນດີເດັ່ນໄດ້ຮັບຫຼຽນໄຊແຮງງານ ຊັ້ນ I ຈາກລັດຖະບານ ຈຳນວນ 10 ທ່ານ ຍິງ 3 ທ່ານ; ໄດ້ຮັບຫຼຽນໄຊແຮງງານ ຊັ້ນ II ຈຳນວນ 4 ທ່ານ ຍິງ 2 ທ່ານ; ໄດ້ຮັບຫຼຽນໄຊແຮງງານ ຊັ້ນ III ຈຳນວນ 6 ທ່ານ ຍິງ 2 ທ່ານ ແລະ ໄດ້ຮັບຫຼຽນກາແຮງງານຈຳນວນ 3 ທ່ານ ຍິງ 1 ທ່ານ; ໄດ້ຮັບໃບຍ້ອງຍໍຂັ້ນລັດຖະບານ ຈຳນວນ 1 ທ່ານ; ໄດ້ຮັບໃບຍ້ອງຍໍ ປະທານສະພາປະຊາຊົນແຂວງ ຈຳນວນ 36 ທ່ານ ຍິງ 18 ທ່ານ ແລະ ໃບຊົມເຊີຍປະທານສະພາປະຊາຊົນແຂວງ ຈຳນວນ 2 ທ່ານ ຍິງ 1 ທ່ານ ໂດຍການຂຶ້ນປະດັບຫຼຽນກາໄຊແຮງງານ ຊັ້ນ 1.2.3 ແລະ ຫຼຽນກາແຮງງານ, ໃບຍ້ອງຍໍ, ຊົມເຊີຍໃນຄັ້ງນີ້ ແມ່ນທ່ານ ສຸວັນນີ ໄຊຊະນະ.

ໂອກາດດຽວກັນນີ້, ບັນດາຄະນະຮັບຜິດຊອບ-ຊີ້ນຳວຽກງານພາຍໃນສະພາປະຊາຊົນແຂວງ ຍັງໄດ້ພ້ອມກັນຂຶ້ນຈັບມືສ້າງຂໍ້ແຂ່ງຂັນ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານໃນໄລຍະປີ 2021-2025 ສາມາດບັນລຸຜົນຕາມທິດທາງແຜນການທີວາງໄວ້ຕື່ມອີກ.

# ສພຂ ອັດຕະປື ປະດັບຫຼຽນໄຊ, ຫຼຽນກາ ແລະ ມອບໃບຍ້ອງຍໍຜົນງານ 5 ປີ



(ສພຊ) ກອງປະຊຸມສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານຂອງຄະນະເລຂາທິການສະພາປະຊາຊົນແຂວງ (ສພຂ) ອັດຕະປື ປະຈຳປີ 2022 ແລະ ພິທີປະດັບຫຼຽນໄຊ, ຫຼຽນກາ, ມອບໃບຍ້ອງຍໍຜົນງານ 5 ປີ. ໄດ້ຈັດຂຶ້ນໃນວັນທີ 20 ກຸມພາ 2023 ທີ່ຫ້ອງປະຊຸມ ສພຂ ໂດຍການເປັນປະທານຂອງທ່ານ ນາງ ແສງອາລຸນ ວົງສາທິການ ເລຂາທິການ ສພຂ; ເຂົ້າຮ່ວມໂດຍທ່ານ ນາງ ມີນາພອນ ໄຊສົມພູ ປະທານ ສພຂ ອັດຕະປື; ມີບັນດາທ່ານຄະນະປະຈຳ, ຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ, ພະນັກງານ, ວິຊາການພາຍໃນ ສພຂ ແລະ ແຂກທີ່ຖືກເຊີນເຂົ້າຮ່ວມ.

ກອງປະຊຸມ, ທ່ານ ນາງ ໂສພະນາ ວົງຊາລາຊິດ ຄະນະເລຂາທິການ ໄດ້ຂຶ້ນຜ່ານບົດລາຍງານການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງຄະນະເລຂາທິການ ສພຂ ເຊິ່ງໄດ້ຍົກໃຫ້ເຫັນຜົນງານດ້ານດີທີ່ພົ້ນເດັ່ນ ເປັນຕົ້ນແມ່ນຖືເອົາວຽກງານການເມືອງ-ແນວຄິດເປັນວຽກສຳຄັນ ແລະ ເອົາໃຈໃສ່ໃນສຶກສາອົບຮົມໃຫ້ແກ່ຖັນແຖວພະນັກງານ-ລັດຖະກອນຢ່າງປົກກະຕິຕໍ່ເນື່ອງດ້ວຍຫຼາຍຮູບການ ເຊັ່ນ ຜ່ານກອງປະຊຸມປະຈຳເດືອນຂອງຄະນະເລຂາທິການ, ກອງປະຊຸມບັນດາອົງການຈັດຕັ້ງມະຫາຊົນ, ປາຖະກະຖາວັນສຳຄັນຕ່າງໆຂອງພັກ-ຂອງຊາດ, ເປັນເຈົ້າການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນໃນການເປັນເສນາທິການໃຫ້ສະພາປະຊາຊົນແຂວງ, ຄະນະປະຈຳສະພາປະຊາຊົນແຂວງ ແລະ ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງໃນການຄົ້ນຄວ້າ-ສັງລວມເນື້ອໃນ; ຄຸ້ມຄອງວຽກງານບໍລິຫານ-ການເງິນ, ວຽກງານຈັດຕັ້ງ-ກວດກາ, ວຽກງານຂໍ້ມູນຂ່າວສານ ແລະ ວຽກງານອື່ນໆຕາມການມອບໝາຍຂອງຄະນະປະຈຳ ສພຂ. ພ້ອມກັນນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມກໍໄດ້ແລກປ່ຽນປະກອບຄຳຄິດຄຳເຫັນ ດ້ານຂໍ້ຄົງຄ້າງ ເພື່ອທີ່ຈະຕ້ອງໄດ້ແກ້ໄຂໃນຕໍ່ໜ້າ, ຈາກນັ້ນ, ໄດ້ຮັບຟັງການເຜີຍແຜ່ດຳລັດ ຂອງລັດຖະບານ ສະບັບເລກທີ 205/ລບ, ລົງວັນທີ 22 ກໍລະກົດ 2022 ວ່າດ້ວຍການປະຫຍັດ ແລະ ຕ້ານການຟູມເຟືອຍ.

ນອກນີ້, ຍັງໄດ້ມີພິທີມອບຫຼຽນໄຊ, ຫຼຽນກາ ແລະ ມອບໃບຍ້ອງຍໍຜົນງານ 5 ປີ (2016-2020), ໃນນັ້ນຫຼຽນໄຊແຮງງານຊັ້ນ I ມີ 1 ທ່ານ, ຫຼຽນໄຊແຮງງານຊັ້ນ II ມີ 4 ທ່ານ ຍິງ 1 ທ່ານ, ຫຼຽນໄຊແຮງງານຊັ້ນ III ມີ 2 ທ່ານ ຍິງ 1 ທ່ານ, ຫຼຽນກາແຮງງານມີ 7 ທ່ານ ຍິງ 2 ທ່ານ, ໃບຍ້ອງຍໍລັດຖະບານມີ 5 ທ່ານ ຍິງ 3 ທ່ານ ແລະ ໃບຍ້ອງຍໍເຈົ້າແຂວງມີ 5 ທ່ານ ຍິງ 1 ທ່ານ.

ຕອນທ້າຍ, ທ່ານ ນາງ ມີນາພອນ ໄຊສົມພູ ໄດ້ມີຄຳເຫັນໂອ້ລົມ ແລະ ສະແດງຄວາມຍ້ອງຍໍຊົມເຊີຍຄະນະເລຂາທິການທີ່ໄດ້ເອົາໃຈໃສ່ປະຕິບັດໜ້າທີ່ວຽກງານຕາມພາລະບົດບາດ ແລະ ສິດ, ໜ້າທີ່ຕາມທີ່ກຳນົດໄວ້ໃນກົດໝາຍ ເຊິ່ງສາມາດຍາດໄດ້ຜົນສຳເລັດໃນຫຼາຍໆດ້ານ, ຄຽງຄູ່ກັບຜົນສຳເລັດ ທ່ານຍັງເນັ້ນ 7 ບັນຫາເພື່ອຈະຕ້ອງສືບຕໍ່ເອົາໃຈໃສ່ຄື: 1. ເພີ່ມທະວີວຽກງານສຶກສາອົບຮົມການເມືອງ-ແນວຄິດໃຫ້ແກ່ສະມາຊິກພັກ, ພະນັກງານ-ລັດຖະກອນ ຂອງສະພາປະຊາຊົນແຂວງໃຫ້ເປັນປົກກະຕິ ແລະ ຕໍ່ເນື່ອງ; 2. ເອົາໃຈໃສ່ປັບປຸງກໍ່ສ້າງຍົກລະດັບທາງດ້ານທິດສະດີ ແລະ ວິຊາສະເພາະໃຫ້ແກ່ພະນັກງານ-ລັດຖະກອນ ໃຫ້ມີຄວາມເຂັ້ມແຂງ, ໜັກເໜັ້ນ ໂດຍສ້າງໂອກາດ ແລະ ເງື່ອນໄຂໃຫ້ໄດ້ເຂົ້າຮ່ວມກອງປະຊຸມສຳມະນາ ພາຍໃຕ້ຫົວຂໍ້ຕ່າງໆ ທີ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ຂະແໜງການທີ່ກ່ຽວຂ້ອງຈັດຂຶ້ນ ເພື່ອສ້າງເປັນພະນັກງານສືບທອດ; 3. ເອົາໃຈໃສ່ປັບປຸງແບບແຜນວິທີເຮັດວຽກ, ມີການຕິດຕາມກວດກາ, ມີການປະເມີນຜົນງານ ເຮັດເປັນລະບົບປົກກະຕິ, ເພື່ອສ້າງແຮງຈູງໃຈ ແລະ ຕີຖອຍແນວຄິດທໍ້ຖອຍ ໃນຖັນແຖວພະນັກງານ-ລັດຖະກອນ, ສາມາດຮັບປະກັນຄວາມຖືກຕ້ອງໂປ່ງໃສ ແລະ ມີຜົນສຳເລັດເປັນຢ່າງດີ; 4. ເອົາໃຈໃສ່ສົ່ງເສີມຄວາມເປັນເຈົ້າການ ແລະ ມີຫົວຄິດປະດິດສ້າງຂອງສະມາຊິກພັກ, ພະນັກງານ-ລັດຖະກອນ ເພື່ອປະກອບສ່ວນອັນສຳຄັນໃນການເຕົ້າໂຮມຄວາມສາມັກຄີ, ການປະຕິບັດວຽກງານວິຊາສະເພາະ, ເປັນເຈົ້າການເຂົ້າຮ່ວມທຸກກິດຈະກຳ ແລະ ຂະບວນການຕ່າງໆໃນແຕລະໄລຍະ; 5. ເອົາໃຈໃສ່ປັບປຸງ ແລະ ຍົກລະດັບໃນການເປັນເສນາທິການຂອງຄະນະເລຂາທິການສະພາປະຊາຊົນແຂວງ ພ້ອມທັງຮັບປະກັນຄຸນນະພາບຂອງສະມາຊິກພັກ, ພະນັກງານ-ລັດຖະກອນ ໃນການປະຕິບັດພາລະບົດບາດ ເປັນເສນາທີ່ດີ, ການປະສານງານທີ່ດີ, ບໍລິການຮັບໃຊ້ໃຫ້ດີເກັ່ງ ແລະ ມີວິໄນ ພ້ອມທັງເປັນຊ່ຽວຊານ ແລະ ທັນສະໄໝວ່ອງໄວຂຶ້ນເທື່ອລະກ້າວ; 6. ເອົາໃຈໃສ່ປົກປັກຮັກສາສຳນັກງານ; ຄຸ້ມຄອງພາຫະນະ, ອຸປະກອນຮັບໃຊ້ ແລະ ສັບສິນສ່ວນລວມ ພ້ອມທັງປັບປຸງລະບົບຄຸ້ມຄອງການນຳໃຊ້ງົບປະມານໃຫ້ມີປະສິດທິພາບ, ໂປ່ງໃສ ແລະ ສາມາດກວດສອບໄດ້ ບົນພື້ນຖານຢຶດໝັ້ນນະໂຍບາຍປະຢັດແຫ່ງຊາດ ແລະ ວຽກງານອື່ນໆ; 7. ອັນສຳຄັນຈະໃຫ້ວຽກງານທີ່ຄະນະເລຂາທິການສະພາປະຊາຊົນແຂວງ ມີຜົນສຳເລັດໃນຕໍ່ໜ້າ ຕ້ອງສ້າງໃຫ້ໄດ້ຄວາມສາມັກຄີເປັນໜຶ່ງດຽວລະຫວ່າງຄະນະພັກ, ຄະນະນຳກັບບັນດາອ້າຍນ້ອງພະນັກງານ-ລັດຖະກອນ ໃນການປະຕິບັດໜ້າທີ່ວຽກງານ ຕ້ອງຖືກກັບຫຼັກການລວມສູນປະຊາທິປະໄຕ, ການຕົກລົງເປັນໝູ່ຄະນະມີຄວາມເປັນເອກະພາບ ເພື່ອພ້ອມກັນຮັບຜິດຊອບຕາມການຕົກລົງ.

(ວິນັດ)

# ຄະນະເລຂາທິການສະພາປະຊາຊົນແຂວງໄຊສົມບູນ ສະຫຼຸບວຽກງານ ປະຈຳປີ 2022

(ສພຊ) ໃນຕອນບ່າຍຂອງວັນທີ 16 ກຸມພາ 2023 ຄະນະເລຂາທິການສະພາປະຊາຊົນແຂວງໄຊສົມບູນ ໄດ້ຈັດກອງປະຊຸມສະຫຼຸບວຽກງານປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ທີ່ສະໂມສອນເມືອງອະນຸວົງ ໂດຍການເປັນປະທານຂອງທ່ານ ແດງ ປະທຸມທອງ ປະທານສະພາປະຊາຊົນ ແຂວງໄຊສົມບູນ ແລະ ທ່ານ ນາງ ຂັນກາບ ໄຊຍະກຸມມານ ເລຂາທິການສະພາປະຊາຊົນແຂວງ; ເຂົ້າຮ່ວມມີຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າຕ່າງໆ ສາມາດຍາດໄດ້ຜົນງານອັນພົ້ນເດັ່ນຫຼາຍດ້ານ ເປັນຕົ້ນດ້ານການເມືອງ-ແນວຄິດ ກໍໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດໃຫ້ແກ່ພະນັກງານ-ລັດຖະກອນ ດ້ວຍຮູບການຕ່າງໆ ໃນນີ້, ວຽກງານເສນາທິການ ໄດ້ເອົາໃຈໃສ່ປະຕິບັດພາລະບົດບາດຂອງຕົນ ໃນການເປັນເສນາທິການໃຫ້ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງຢ່າງແຂງແຮງ ໂດຍປະສານສົມທົບກັບອົງການປົກຄອງແຂວງ, ເມືອງ ແລະ ສະມາຊິກສະພາປະຊາຊົນແຂວງ ປະຈຳຢູ່ແຕ່ລະເມືອງ ວຽກງານອື່ນໆ ເຊັ່ນ: ວັດຖຸອຸປະກອນ, ສະຖານທີ່ປະຊຸມ ແລະ ອື່ນໆ.

ໂອກາດດັ່ງກ່າວ, ທ່ານ ແດງ ປະທຸມທອງ ໄດ້ມີຄຳເຫັນໂອ້ລົມຕໍ່ກອງປະຊຸມ ເຊິ່ງທ່ານໄດ້ຮຽກຮ້ອງໃຫ້ຄະນະເລຂາທິການສະພາປະຊາຊົນແຂວງ ຈົ່ງສືບຕໍ່ຈັດຕັ້ງປະຕິບັດວຽກງານຂອງຕົນ ຕາມຂອບເຂດສິດ ແລະ ໜ້າທີ່ຕາມການຈັດຕັ້ງມອບໝາຍໃຫ້ ດ້ວຍຄວາມເປັນເຈົ້າການສູງ ເພື່ອຮັບປະກັນການເປັນເສນາທິການໃຫ້ສະພາປະຊາຊົນແຂວງ ຢ່າງມີປະສິດທິພາບ ພ້ອມທັງເຕົ້າ




ພ້ອມດ້ວຍຄະນະກຳມະການເສດຖະກິດແຜນການ-ການເງິນ, ຄະນະກຳມະການຍຸຕິທຳປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ພະນັກງານວິຊາການ ພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ໃນກອງປະຊຸມ, ທ່ານ ບີ ເຮີ່ ຮອງເລຂາທິການສະພາປະຊາຊົນແຂວງ ໄດ້ຜ່ານຮ່າງບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງຄະນະເລຂາທິການສະພາປະຊາຊົນແຂວງໄຊສົມບູນ ເຊິ່ງຕະຫຼອດໄລຍະ 1 ປີຜ່ານມາ ເຫັນວ່າ ສະພາບການຈັດຕັ້ງປະຕິບັດວຽກງານເພື່ອສ້າງສິ່ງອຳນວຍຄວາມສະດວກ ໃຫ້ແກ່ການລົງເຄື່ອນໄຫວວຽກງານຂອງຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການສະພາປະຊາຊົນແຂວງ ໃນການລົງຕິດຕາມ-ກວດກາການຈັດຕັ້ງປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ດ້ວຍຄວາມເອົາໃສ່ພິຈາລະນາໃຫ້ຄຳປຶກສາແກ່ປະຊາຊົນ. ນອກນີ້, ຄະນະເລຂາທິການໄດ້ສະໜອງງົບປະມານ, ອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດໜ້າທີວຽກງານເຊິ່ງກັນແລະກັນ ເປັນຕົ້ນການຈໍລະຈອນເອກະສານ, ເນື້ອໃນຮັບໃຊ້ກອງປະຊຸມການເຄື່ອນໄຫວໂຮມຄວາມສາມັກຄີພາຍໃນໃຫ້ປຶກແຜ່ນເອົາໃຈໃສ່ຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນ ດ້ວຍຄວາມເປັນເຈົ້າການສູງ ເພື່ອສ້າງສິ່ງອຳນວຍຄວາມສະດວກໃຫ້ແກ່ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 18 ລວມໄປເຖິງການຄຸ້ມຄອງບໍລິຫານແຜນການ-ການເງິນ ໃຫ້ມີຄວາມຮັດກຸມ ແລະ ສອດຄ່ອງກັບສະພາບວຽກຕົວຈິງ ເພື່ອປັບປຸງການເປັນເສນາທິການໃຫ້ສະພາປະຊາຊົນແຂວງໄດ້ເຄື່ອນໄຫວຮັບໃຊ້ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າຊາວແຂວງໄຊສົມບູນ ຢ່າງແທ້ຈິງ.

(ແສງຕາວັນ ລັດຕະນະວົງ)






# ກົດໝາຍ ວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ

ຕໍ່ຈາກສະບັບກ່ອນ...

**ມາດຕາ 51 ຂໍ້ຫ້າມ ສໍາລັບຜູ້ດໍາເນີນທຸລະກິດກ່ຽວກັບວັດຖຸລະເບີດທາງອຸດສາຫະກໍາ**

ຫ້າມຜູ້ດໍາເນີນທຸລະກິດກ່ຽວກັບວັດຖຸລະເບີດທາງອຸດສາຫະກໍາ ມີພຶດຕິກໍາ ດັ່ງນີ້:

1. ດໍາເນີນທຸລະກິດກ່ຽວກັບວັດຖຸລະເບີດທາງອຸດສາຫະກໍາ ໂດຍບໍ່ໄດ້ຮັບອະນຸຍາດ;
2. ດໍາເນີນການຜະລິດ, ນໍາເຂົ້າ, ສົ່ງອອກ, ຂົນສົ່ງ, ຈໍາໜ່າຍ ແລະ ນໍາໃຊ້ວັດຖຸລະເບີດທາງອຸດສາຫະກໍາ ໂດຍບໍ່ຖືກຕ້ອງຕາມຈຸດປະສົງທີ່ໄດ້ຮັບອະນຸຍາດ;
3. ດໍາເນີນທຸລະກິດກ່ຽວກັບວັດຖຸລະເບີດທາງອຸດສາຫະກໍາ ທີ່ສ້າງຜົນກະທົບຕໍ່ຊີວິດ, ສຸຂະພາບຂອງຄົນ, ສັດ, ພືດ, ຊັບສິນ ແລະ ສິ່ງແວດລ້ອມ;
4. ສວຍໃຊ້ການດໍາເນີນທຸລະກິດ ເພື່ອເຄື່ອນໄຫວກໍ່ຄວາມບໍ່ສະຫງົບ ແລະ ຄວາມບໍ່ເປັນລະບຽບຮຽບຮ້ອຍໃນສັງຄົມ;
5. ຂົນສົ່ງ ແລະ ເຄື່ອນຍ້າຍວັດຖຸລະເບີດທາງອຸດສາຫະກໍາ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ຢຸດຈອດຕາມຈຸດທີ່ບໍ່ໄດ້ອະນຸຍາດ;
6. ຖິ້ມ ຫຼື ທໍາລາຍ ສິ່ງເສດເຫຼືອຂອງວັດຖຸລະເບີດທາງອຸດສາຫະກໍາ ໂດຍບໍ່ໄດ້ຮັບອະນຸຍາດ;
7. ເອົາໃບອະນຸຍາດ ໄປຄໍ້າປະກັນ ຫຼື ປະກອບເປັນຮຸ້ນ, ໃຫ້ຜູ້ອື່ນຢືມ ຫຼື ເຊົ່າ, ໂອນ ຫຼື ຂາຍ ໃຫ້ຜູ້ອື່ນ;
8. ໃຫ້ສິນບົນແກ່ ເຈົ້າໜ້າທີ່ ແລະ ພະນັກງານທີ່ຮັບຜິດຊອບວຽກງານຄຸ້ມຄອງວັດຖຸລະເບີດທາງອຸດສາຫະກໍາ;
9. ໃຊ້ຄວາມຮຸນແຮງ ຫຼື ສວຍໃຊ້ໜ້າທີ່, ຕໍາແໜ່ງຂອງຜູ້ມີສິດໃນການຄຸ້ມຄອງວັດຖຸລະເບີດທາງອຸດສາຫະກໍາ ເພື່ອນາບຂູ່ເຈົ້າໜ້າທີ່ ຫຼື ພະນັກງານ ທີ່ກ່ຽວຂ້ອງ;
10. ປອມແປງ ແລະ ທໍາລາຍເອກະສານ ກ່ຽວກັບວຽກງານຄຸ້ມຄອງວັດຖຸລະເບີດທາງອຸດສາຫະກໍາ;
11. ປົກປິດ, ເຊື່ອງອໍາ ຫຼື ແຈ້ງຂໍ້ມູນກ່ຽວກັບວັດຖຸລະເບີດທາງອຸດສາຫະກໍາ ຕໍ່ເຈົ້າໜ້າທີ່ໂດຍບໍ່ຖືກຕ້ອງ;
12. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 52 ຂໍ້ຫ້າມ ສໍາລັບເຈົ້າໜ້າທີ່ ຫຼື ພະນັກງານທີ່ກ່ຽວຂ້ອງ**

ຫ້າມ ເຈົ້າໜ້າທີ່ ຫຼື ພະນັກງານທີ່ກ່ຽວຂ້ອງ ມີພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່, ຕໍາແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ ແລະ ໃຫ້ພັກພວກຂອງຕົນ;
2. ທວງເອົາ, ຂໍເອົາ, ຮັບເອົາສິນບົນ ຫຼື ຫາຜົນປະໂຫຍດອື່ນ ໂດຍບໍ່ຖືກຕ້ອງ;
3. ກົດໜ່ວງ, ຖ່ວງດຶງ ແລະ ແກ່ຍາວເວລາໃນການພິຈາລະນາເອກະສານ ກ່ຽວກັບການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ;
4. ຊື້ ຂາຍ, ປະກອບ ແລະ ນໍາໃຊ້ອາວຸດ ແລະ ວັດຖຸລະເບີດ ໂດຍບໍ່ໄດ້ຮັບອະນຸຍາດ;
5. ປອມແປງ ແລະ ທໍາລາຍ ເອກະສານ ກ່ຽວກັບການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ;
6. ປົກປິດ, ເຊື່ອງອໍາ, ບໍ່ແຈ້ງ ຫຼື ແຈ້ງບັນຊີກ່ຽວກັບອາວຸດ ແລະ ວັດຖຸລະເບີດ ໂດຍບໍ່ຖືກຕ້ອງ;
7. ປະລະໜ້າທີ່ ແລະ/ຫຼື ເມີນເສີຍຕໍ່ເຫດສຸກເສີນກ່ຽວກັບອາວຸດ ແລະ ວັດຖຸລະເບີດ ທີ່ເກີດຂຶ້ນ;
8. ເປີດເຜີຍຄວາມລັບກ່ຽວກັບວຽກງານຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ;
9. ອອກໃບອະນຸຍາດນໍາໃຊ້ອາວຸດເສິກ ໃຫ້ຜູ້ບໍ່ແມ່ນເປົ້າໝາຍ ໄດ້ຮັບອະນຸຍາດປະກອບອາວຸດເສິກ;
10. ເອົາຊິ້ນສ່ວນຂອງອາວຸດ ແລະ ວັດຖຸລະເບີດ ໄປແລກປ່ຽນ, ຊື້ ຂາຍ ແລະ ຍຸບ ຫຼື ທໍາລາຍ ໂດຍບໍ່ໄດ້ຮັບອະນຸຍາດ;
11. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 53 ຂໍ້ຫ້າມ ສໍາລັບຜູ້ໄດ້ຮັບອະນຸຍາດປະກອບອາວຸດ**

ຫ້າມຜູ້ໄດ້ຮັບອະນຸຍາດປະກອບອາວຸດ ມີພຶດຕິກໍາ ດັ່ງນີ້:

1. ເອົາອາວຸດໃຫ້ບຸກຄົນໃນຄອບຄົວ ຫຼື ບຸກຄົນອື່ນຢືມ, ນໍາໃຊ້, ມອບ-ໂອນ, ແລກປ່ຽນ, ຊື້ ຂາຍ, ຈໍານໍາ ແລະ ຈໍານອງ;
2. ນໍາໃຊ້ອາວຸດ ບັງຄັບ ແລະ ນາບຂູ່ບຸກຄົນອື່ນ;
3. ນໍາໃຊ້ອາວຸດກໍ່ຄວາມບໍ່ສະຫງົບ ແລະ ຄວາມບໍ່ເປັນລະບຽບຮຽບຮ້ອຍໃນສັງຄົມ;
4. ພົກພາ ຫຼື ຖືອາວຸດທຸກປະເພດ ເຂົ້າໄປໃນສະຖານທີ່ສາທາລະນະ ໂດຍບໍ່ໄດ້ຮັບອະນຸຍາດ;
5. ດັດແປງສະພາບເຕັກນິກ, ຮູບຮ່າງ, ສີ ແລະ ໂຄງປະກອບ ອາວຸດ;
6. ເອົາຊິ້ນສ່ວນຂອງອາວຸດ ໄປແລກປ່ຽນ, ຊື້ ຂາຍ, ຍຸບ ຫຼື ທໍາລາຍ ໂດຍບໍ່ໄດ້ຮັບອະນຸຍາດ;
7. ນໍາເອົາອາວຸດປືນກິລາ ໄປນໍາໃຊ້ນອກສະຖານທີ່ຝຶກຊ້ອມ ຫຼື ສະຖານທີ່ແຂ່ງຂັນ;
8. ປະອາວຸດໃນເວລາປະຕິບັດໜ້າທີ່ ຫຼື ເວລາສູ້ຮົບ;
9. ປອມແປງເອກະສານ ອະນຸຍາດນໍາໃຊ້ອາວຸດ;
10. ນໍາໃຊ້ອາວຸດເສິກ ເຂົ້າໃນການລ່າ ສັດປ່າ, ສັດນໍ້າ ແລະ ອື່ນໆ;
11. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ພາກທີ VI**
**ການຄຸ້ມຄອງ ແລະ ການກວດກາ**
**ໝວດທີ 1**
**ການຄຸ້ມຄອງວຽກງານຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ**

**ມາດຕາ 54 ອົງການຄຸ້ມຄອງວຽກງານຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານຄຸ້ມຄອງອາວຸດ ແລະ ວັດຖຸລະເບີດຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອ່ານຕໍ່ສະບັບໜ້າ...

## ວິທີເຮັດວຽກ




ແຕ່ກ່ອນຈົນເຖິງດຽວນີ້, ຍ້ອນມີພະຍາດໃຈແຄບ, ມັນຈຶ່ງມັກມີເລື່ອງກະທົບກະເທືອນລະຫວ່າງພາກສ່ວນດ້ວຍກັນ, ລະຫວ່າງພາກສ່ວນກັບໝົດທັງປະເທດ, ລະຫວ່າງສະມາຊິກພັກ, ລະຫວ່າງພະນັກງານທ້ອງຖິ່ນ ກັບພະນັກງານທີ່ຊັ້ນສູງສົ່ງລົງ, ລະຫວ່າງພະນັກງານທະຫານ ກັບພະນັກງານແນວຮ່ວມ, ລະຫວ່າງພະນັກງານເກົ່າ ກັບພະນັກງານໃໝ່, ລະຫວ່າງສໍານັກງານນີ້ກັບສໍານັກງານນັ້ນ ລະຫວ່າງກອງນີ້ກັບກອງນັ້ນ ແລະ ລະຫວ່າງທ້ອງຖິ່ນນີ້ ກັບທ້ອງຖິ່ນນັ້ນຢູ່ເລື້ອຍໆ. ເພາະສະນັ້ນ, ຕໍ່ໄປນີ້ ພວກເຮົາຕ້ອງຂຸດເກົາພະຍາດອັນຮ້າຍກາດນີ້ອອກໃຫ້ໝົດກ້ຽງ, ເຮັດໃຫ້ພັກຂອງເຮົາ ເປັນເອກະພາບກັນ ແລະ ສາມັກຄີກັນຢ່າງສົ້ນເຊີງ.

**ພະຍາດໃຈແຄບກ່ຽວກັບພາຍນອກ.**

ເພື່ອນສະຫາຍເຮົາຫຼາຍຄົນ ຍັງມີພະຍາດຂີ້ອິ່ງ, ອວດຕົວ, ດູຖູກຜູ້ອື່ນ, ບໍ່ຍອມຍາກຮ່ຳຮຽນເອົາຄວາມດີຂອງຜູ້ອື່ນ, ພໍແຕ່ຮູ້ທິດສະດີບາງຄວາມ ກໍອວດວ່າຕົນເກັ່ງ ຖືຜູ້ອື່ນວ່າບໍ່ເປັນເລື່ອງ ນຶກວ່າຕົນເອງລື່ນໝູ່ໝົດທຸກຄົນ, ນັ້ນແມ່ນພະຍາດໃຈແຄບຢ່າງໜັກ.

ເພື່ອນສະຫາຍເຫຼົ່ານີ້ລືມເສຍວ່າ ຖ້າມີພຽງແຕ່ຄວາມສາມັກຄີໃນພັກເທົ່ານັ້ນ ການປະຕິວັດກໍບໍ່ສາມາດສໍາເລັດຜົນໄດ້, ຍັງຕ້ອງສາມັກຄີປະຊາຊົນທັງປະເທດອີກ, ພວກເຮົາລືມເສຍວ່າ ຖ້າປຽບໃສ່ຈໍານວນປະຊາຊົນແລ້ວ ຈໍານວນສະມາຊິກພັກເຮົາພຽງແຕ່ເປັນຈໍານວນໜ້ອຍ, ໃນຈໍານວນປະຊາຊົນນັບຮ້ອຍຄົນ ຈຶ່ງມີສະມາຊິກພັກເຮົາຜູ້ໜຶ່ງ, ຖ້າບໍ່ມີປະຊາຊົນຊ່ວຍແຮງແລ້ວ ພັກຂອງເຮົາກໍບໍ່ເຮັດຫຍັງໄດ້ໝົດ.

ເພາະສະນັ້ນ ພວກເຮົາຈຶ່ງຕ້ອງຮ່ວມມືກັບພວກຄົນນອກພັກ, ບໍ່ຄວນດູຖູກເຂົາເຈົ້າ ຫຼື ຕິຕຽນໃຫ້ເຂົາເຈົ້າເສຍໃຈ ພວກເຮົາຕ້ອງຕິດຕໍ່ໃກ້ຊິດກັບປະຊາຊົນ, ບໍ່ຄວນຫ່າງໄກຈາກປະຊາຊົນ, ໄກຈາກປະຊາຊົນ ແມ່ນແຍກຕົວອອກໂດດດ່ຽວ, ແຍກຕົວອອກໂດດດ່ຽວ ແມ່ນເດັດຂາດຕ້ອງປະລາໄຊ.

ການທີ່ບໍ່ຮູ້ໃຊ້ຄວາມສາມາດຂອງຄົນອື່ນ, ອັນໃດກໍເອົາມາອູ້ມໄວ້ແຕ່ຕົວຜູ້ດຽວໝົດ ກໍແມ່ນເປັນຍ້ອນພະຍາດໃຈແຄບ. ອູ້ມວຽກເອົາຜູ້ດຽວນັ້ນ ຍ່ອມເຮັດບໍ່ຫຼ້ອນ, ເປັນທໍາມະດາ, ການປະພຶດຕົວບໍ່ດີ ບໍ່ງາມຕໍ່ເພື່ອນຮ່ວມຊາດ ໃນສາສະໜາຕ່າງໆ ຊົນຊັ້ນຕ່າງໆ ຊົນຊາດຕ່າງໆ, ນັກຮຽນຮູ້ຊັ້ນຕ່າງໆ ແລະ ເຈົ້ານາຍຂ້າລາຊະການພະແນກຕ່າງໆ. ນັ້ນກໍມາຈາກພະຍາດໃຈແຄບດັ່ງດຽວກັນ.

ແຕ່ນີ້ຕໍ່ໄປ, ພະນັກງານແຕ່ລະຄົນ ສະມາຊິກຂອງພັກແຕ່ລະຄົນ ຕ້ອງຕັ້ງໃຈເດັດດ່ຽວ ແກ້ໄຂດັດແປງພະຍາດໃຈແຄບນັ້ນ ເພື່ອປະຕິບັດນະໂຍບາຍມະຫາສາມັກຄີໃຫ້ຈົບໄດ້. ນະໂຍບາຍບັນລຸຜົນ ຈຶ່ງພາໃຫ້ການຕໍ່ຕ້ານມີໄຊຊະນະ.

ອ່ານຕໍ່ສະບັບໜ້າ...




# ໝູນໄປຕາມໂລກ

# ດົ້ນກົບເມກ

ເມື່ອໂລກມັນໝູນປ່ຽນແປງຕະຫຼອດເວລາ ຊີວິດຂອງຄົນເຮົາກໍຕ້ອງໄດ້ປັບປ່ຽນໄປຕາມກະແສປ່ຽນແປງຂອງໂລກ ເຊິ່ງຜູ້ຂຽນເຊື່ອວ່າ: ບໍ່ມີຄົນໃດທີ່ຈະຢູ່ຂວາງໂລກໄດ້ ເພາະຖ້າຄົນໃດບໍ່ປ່ຽນໄປຕາມການພັດທະນາຂອງກະແສໂລກ ຍ່ອມກາຍເປັນຄົນຫຼ້າສະໄໝ ຄືກ້າວບໍ່ທັນໂລກ, ໂລກນີ້ ມັນໝູນດ້ວຍຕົວມັນເອງ ຄົນເຮົາກໍໝູນດ້ວຍແນວຄິດຈິດໃຈຂອງໂຕເອງ ເພາະມີຈິດນຳໄປ ດັ່ງເດືອດຮ້ອນ ເພາະຈິດໃຈທີ່ບໍ່ສະຫງົບນິ້ງ, ຈິດຂອງປຸຖຸຊົນ (ຄົນທຳມະດາ) ຍ່ອມຄິດໄປຕາມກະແສໂລກ, ຄວາມເດືອດຮ້ອນ ວຸ້ນວາຍຂອງໂລກ ເກີດມາຈາກແນວຄິດຈິດໃຈຂອງມະນຸດນີ້ເອງ ເພາະຖ້າວ່າຄົນເຮົາມີຈິດຄິດເປັນກຸສົນດ້ວຍຄວາມເມດຕາປານີ ໂລກກໍຈະສະຫງົບສຸກ; ແຕ່ຖ້າວ່າຈິດຂອງຄົນຄິດແຕ່ແນວອະກຸສົນ ກໍນຳມາເຊິ່ງຄວາມສັບສົນວຸ້ນວາຍ ເພາະຈິດໃຈຄິດບຽດບຽນເອົາປຽບກັນ..., ຈິດຄິດທຳຫາກ ເຖິງແມ່ນວ່າເຮົາຈະກ້າວສວນທາງກັບໂລກໝູນແຕ່ເຮົາກໍຢູ່ເທິງຜິວໂລກທີ່ມັນໝູນໄປຕາມກົດເກນທຳມະຊາດຂອງມັນ; ທາງພຸດທະສາສະໜາຍັງຖືວ່າ: ສັບພະສິ່ງ ລວມທັງໂລກ ແລະ ຄົນເຮົາ ເປັນໄປຕາມກົດເກນຂອງການປ່ຽນແປງທີ່ເອີ້ນວ່າ ໄຕລັກຄື: ອະນິດຈັງ-ທຸກຂັງ-ອະນັດຕາ ແລະ ຫຼັກຄວາມສຳພັນ ເຊື່ອມໂຍງກັບສັບພະສິ່ງ...

ຫຼັກແຫ່ງການປ່ຽນແປງ ໄຕລັກຄື: ອະນິດຈັງ ຄວາມບໍ່



ມີພຸດທະພາສິດກ່າວໄວ້ບົດໜຶ່ງວ່າ: ໂລກຍ່ອມມີຈິດນຳໄປ ມີຈິດເສືອກໄສໄປ ໂລກທັງໝົດເປັນໄປຕາມອຳນາດຂອງຈິດ.

ທຳມະຊາດຂອງຈິດຍ່ອມປຸງແຕ່ງຢູ່ຕະຫຼອດເວລາ ຖ້າໃຜກໍຕາມ ບໍ່ເຝິກຈິດໃຫ້ຢູ່ກັບປັດຈຸບັນ ອາດມີຄວາມທຸກລາຍຄອບງຳດ້ວຍຄວາມໂກດຮ້າຍ ໂລກ ແລະ ສັງຄົມມະນຸດກໍບໍ່ສະຫງົບສຸກ.

ການໝູນຂອງໂລກໃນທາງວິທະຍາສາດ ໂລກບໍ່ໄດ້ໝູນອ້ອມໂຕເຮົາ ແລະ ຄົນເຮົາກໍບໍ່ໄດ້ໝູນອ້ອມໂລກແຕ່ຄົນເຮົາໝູນໄປຕາມໂລກຕ່າງທ່ຽງ-ທຸກຂັງຄວາມເປັນທຸກອະນັດຕາບໍ່ແມ່ນຕົວຕົນທີ່ແທ້ຈິງ; ມື້ໜຶ່ງເຮົາກໍເສື່ອມສະຫຼາຍໄປຕາມການເວລາ ດັ່ງນັ້ນ, ມະນຸດບໍ່ຄວນຫຼົງໃນບ່ວງມານຍາຂອງໂລກ ຂໍພຽງແຕ່ໃຫ້ມີສະຕິປັນຍາ ໝູນຊີວິດໄປຕາມໂລກຢ່າງມີຄວາມສຸກກໍພໍແລ້ວ!

# ວັນແມ່ຍິງສາກົນ

# ໂດຍ: ຜູ້ອື່ນ

ວັນແມ່ຍິງສາກົນ ແມ່ນວັນທີ່ກຳມະກອນເພດຍິງ ສາມັກຄີກັນຕໍ່ສູ້ທວງເອົາສິດ, ຜົນປະໂຫຍດ ແລະ ແກ້ໄຂຊີວິດການເປັນຢູ່ຂອງຕົນຈາກພວກນາຍທຶນ ຍ້ອນແມ່ຍິງຖືກກົດຂີ່ຢ່າງໜັກໜ່ວງ, ເຮັດວຽກຫຼາຍຊົ່ວໂມງ ແຕ່ໄດ້ຮັບຄ່າຕອບແທນຕ່ຳ, ເຮັດວຽກແບບບໍ່ມີການຮັບປະກັນ, ບໍ່ມີສະຫວັດດີການ, ບໍ່ມີການຮັກສາສຸຂະພາບ ພ້ອມທັງຍັງຖືກດູໝິ່ນປະມາດ, ຖືເປັນສິນຄ້າ, ເປັນເຄື່ອງຫຼິ້ນ ເປັນດອກໄມ້ຮິມທາງ, ຖືກຂົ່ມຂືນກະທຳສຳເລົາ, ຖືກທຳຮ້າຍທັງຮ່າງກາຍ ແລະ ຈິດໃຈ ແລະ ຖືກໄລ່ອອກຈາກວຽກເມື່ອເວລາຖືພາ, ເກີດລູກ ຫຼື ເວລາເຈັບເປັນ ກໍບໍ່ໄດ້ຮັບການປິ່ນປົວ ຈຶ່ງເຮັດໃຫ້ກຳມະກອນຍິງຄຽດແຄ້ນ ຈຶ່ງໄດ້ສາມັກຄີກັນລຸກຮື້ຂຶ້ນຕໍ່ສູ້ທວງໃຫ້ນາຍທຶນຕ້ອງແກ້ໄຂຊີວິດຄວາມເປັນຢູ່ຂອງພວກເຂົາເຈົ້າ.

ວັນທີ 8 ມີນາ 1899 ກຳມະກອນຍິງຢູ່ໂຮງງານຕ່ຳແຜ່ນ ແລະ ຕັດຫຍິບ ໄດ້ຈັດຕັ້ງໂຮມຊຸມນຸມປະທ້ວງ ແລະ ຄັດຄ້ານຕໍ່ການໃຫ້ຄ່າແຮງງານຕ່ຳ ແລະ ສະຖານທີ່ບໍ່ຮັບປະກັນສຸຂະພາບ ການປະທ້ວງຂອງເຂົາເຈົ້າຄັ້ງນີ້ ຖືກຕຳຫຼວດເຂົ້າສະຫຼາຍ ແລະ ຈັບກຸມຈຳນວນໜຶ່ງ; ໃນວັນທີ 8 ມີນາ 1908 ແມ່ຍິງຈຳນວນ 15.000 ຄົນ ໄດ້ເດີນຂະບວນປະທ້ວງ ທວງໃຫ້ນາຍທຶນຫຼຸດຜ່ອນຊົ່ວໂມງເຮັດວຽກ ຢຸດເຊົາການຂູດຮີດແຮງງານເດັກ, ທວງໃຫ້ແມ່ຍິງມີສິດ ໃນການອອກສຽງເລືອກຕັ້ງ ແລະ ການຮັບສະໝັກເລືອກຕັ້ງ ພາຍໃຕ້ຄຳຂວັນ "ເຂົ້າຈີ່ ແລະ ດອກກຸຫຼາບ" ອັນໝາຍເຖິງເສດຖະກິດ ແລະ ຊີວິດການເປັນຢູ່ທີ່ດີຂຶ້ນ; ມາເຖິງປີ 1910 ກອງປະຊຸມສາກົນ ກ່ຽວກັບບັນຫາແມ່ຍິງໄດ້ໄຂຂຶ້ນເປັນຄັ້ງທຳອິດທີ່ໂກເປນຮາກ ນະຄອນຫຼວງປະເທດເດັນມາກ ໂດຍມີຜູ້ແທນເຂົ້າຮ່ວມຈາກ 17 ປະເທດ ກອງປະຊຸມໄດ້ຕົກລົງ ແລະ ຮັບຮອງເອົາວັນທີ 8 ມີນາຂອງທຸກໆປີເປັນວັນແມ່ຍິງສາກົນ ເຊິ່ງໄດ້ກາຍເປັນເຫດການການເມືອງສຳຄັນ ອັນເປັນຂີດໝາຍພື້ນຖານຂອງຂະບວນການແມ່ຍິງສາກົນ ໃນການຕໍ່ສູ້ທວງເອົາສິດ ແລະ ຜົນປະໂຫຍດອັນຊອບທຳຂອງແມ່ຍິງ ຊາວຜູ້ອອກແຮງງານໃນທົ່ວໂລກ ກາຍເປັນວັນລະນຶກເຖິງການຕໍ່ສູ້ຂອງແມ່ຍິງ ເພື່ອປົດປ່ອຍຕົນເອງ ແລະ ສະເໝີພາບປະຊາທິປະໄຕ ຄືກັນກັບເພດຊາຍ.

ແຕ່ອະດີດເຖິງປັດຈຸບັນ ແມ່ຍິງໄດ້ປະເຊີນກັບອຸປະສັກ ແລະ ຂໍ້ຈຳກັດທາງດ້ານສັງຄົມ, ວັດທະນະທຳ ແລະ ລະບົບຄວາມເຊື່ອ ຈຶ່ງເຮັດໃຫ້ແມ່ຍິງຖືກກຳນົດໃຫ້ເປັນຜູ້ຮັບຄວາມຊ່ວຍເຫຼືອ ແລະ ມີໜ້າທີ່ທາງສະລີລະ ຫຼືຮ່າງກາຍ ທີ່ປາກົດໃນຫຼາຍສັດຕະວັດຜ່ານມາ ເຊິ່ງໄດ້ມີການຖົກຖຽງກ່ຽວກັບອຳນາດ, ໂອກາດ ແລະ ສະຖານະທາງສັງຄົມຂອງແມ່ຍິງ ໂດຍສະເພາະແມ່ນຄວາມສະເໝີພາບ ຍິງ-ຊາຍ.

ຈາກຂໍ້ມູນ ແລະ ສະຖິຕິໃນປັດຈຸບັນ ໄດ້ສະແດງໃຫ້ເຫັນຈຳນວນແມ່ຍິງທີ່ເຂົ້າມາມີບົດບາດໃນການປະຕິບັດໜ້າທີ່ວຽກງານຕ່າງໆ ທັງພາກລັດ ແລະ ເອກະຊົນ ພ້ອມນັ້ນ, ຈຳນວນແມ່ຍິງທີ່ໄດ້ຮັບເລືອກຕັ້ງເພື່ອໃຫ້ເຮັດໜ້າທີ່ທາງການເມືອງ ທັງລະດັບຊາດ ແລະ ລະດັບທ້ອງຖິ່ນ ກໍນັບມື້ນັບເພີ່ມຂຶ້ນ ເຖິງວ່າມັນຈະເຊື່ອງຊ້າກໍຕາມ ແຕ່ລັດຖະບານກໍໄດ້ພະຍາຍາມເອົາໃຈໃສ່ໃນການສົ່ງເສີມ, ຊຸກຍູ້ວຽກງານຄວາມສະເໝີພາບ ຍິງ-ຊາຍ ໂດຍການວາງນະໂຍບາຍ, ຍຸດທະສາດ, ກົດໝາຍ, ລະບຽບການ, ມາດຕະການ, ແຜນດຳເນີນງານ, ໂຄງການ, ສຶກສາອົບຮົມສ້າງຈິດສຳນຶກ, ປະກອບບຸກຄະລາກອນ, ສະໜອງຂໍ້ມູນຂ່າວສານ, ງົບປະມານ, ວັດຖຸອຸປະກອນ ແລະ ສ້າງທຸກເງື່ອນໄຂໃຫ້ຍິງ-ຊາຍ ໄດ້ຮັບການພັດທະນາຕົນເອງຢ່າງຮອບດ້ານ.



# ວຸດສູນກາງ

ວຸດສູນກາງ: ໃນຄຳວ່າ ວຸດສູນກາງ ແມ່ນວຸດອັນໃດອັນໜຶ່ງຢູ່ໃຈກາງຂອງວົງກົມ ຫຼືວົງຕ່າງໆ ເຊິ່ງເປັນວຸດເຄິ່ງກາງຂອງມັນ ຫຼື ເອີ້ນວ່າ ວຸດລວມຂອງວັດຖຸສິ່ງຂອງໃດໜຶ່ງ. ວຸດສູນກາງນີ້ ຖ້າຈະເວົ້າເຖິງອຳນາດການປົກຄອງ ກໍຕ້ອງມີວຸດສູນກາງໃນຂັ້ນຕ່າງໆ ເຊັ່ນ ວຸດສູນກາງຂັ້ນແຂວງ, ຂັ້ນເມືອງ, ເຂດ ແລະ ບ້ານ ເພາະເວົ້າເຖິງອຳນາດການປົກຄອງ ຈະຕ້ອງເວົ້າເຖິງຄົນຜູ້ຮັບຜິດຊອບໃນຂັ້ນຕ່າງໆ ຕາມການແຕ່ງຕັ້ງ ຫຼືມອບໝາຍ. ໃນຄຳວ່າ ວຸດສູນກາງດັ່ງກ່າວນັ້ນ ມັນຄ້າຍກັນກັບວ່າ "ແກນ" ເຊັ່ນແກນນຳເປັນຕົ້ນ, ຖ້າເປັນເຄື່ອງໄຟຟ້າ ຫລືກຳເນີດໄຟຟ້າ ກໍຕ້ອງມີແກນກາງ ທີ່ພາໃຫ້ປິ່ນອ້ອມຂອງວົງ ເພື່ອພາໃຫ້ເກີດກະແສໄຟຟ້າ, ຖ້າເປັນປະເພດການຈັດຕັ້ງນຳພາ ກໍຕ້ອງມີແກນນຳເປັນຫລັກ ເພື່ອໃຫ້ຮູ້ຜົນໄດ້ຜົນເສຍໃນການນຳພາ, ຈາກບັນຫາດັ່ງກ່າວນັ້ນ ມັນຈຶ່ງມີແກນນຳ ຫລືວຸດສູນກາງໃນອຳນາດການປົກຄອງໃນຄຳວ່າ "ວຸດສູນກາງ" ອາດເປັນພາສາລາວກໍໄດ້.



# ຂຽນຄຳລາວໃຫ້ຖືກ

# ຄູແສງ

| ຄຳຖືກ | ຄຳຜິດ |
|---|---|
| ສະມາຊິກ | ສຳມາຊິກ |
| ສາມັກຄີ | ສາມະຄີ |
| ສັກດີນາ | ສັກດີນາ |
| ບັນພະບຸລຸດ | ບັນພະບູລຸດ |
| ປະລະໄນ | ປາລະໄນ |
| ໄວຍາກອນ | ໄວຍະກອນ |
| ອານຸພາບ | ອະນຸພາບ |
| ອຸດສາຫະກຳ | ອຸດສະຫະກຳ |



## ສຸກສະບາຍຫາຍໂຣຄາ

# ໂຣກແພນິກ ຫຼື ໂຣກຕື່ນຕົກໃຈ

ແປ ແລະ ຮຽບຮຽງໂດຍ: ສາວເໜືອ



ໂຣກແພນິກ ແມ່ນໂຣກວິຕົກກັງວົນຊະນິດໜຶ່ງ ຫຼືເອີ້ນວ່າ ໂຣກຕື່ນຕົກໃຈ ຈະມີອາການຕື່ນຕົກໃຈແຮງແບບບໍ່ຄາດຄິດມາກ່ອນ ແລະ ເກີດຂຶ້ນເລື້ອຍໆ ຈົນໄປລົບກວນການໃຊ້ຊີວິດປະຈໍາວັນ ເຊິ່ງເກີດຈາກຮໍໂມນຫຼູດ ຫຼື ປ່ຽນແປງກະທັນຫັນ ເຮັດໃຫ້ລະບົບປະສາດສັ່ງການອັດຕະໂນມັດເຮັດວຽກຜິດປົກກະຕິ ຄ້າຍຄືກັບໄຟຟ້າລັດວົງຈອນ ເຮັດໃຫ້ລະບົບປະສາດ ທີ່ຄວບຄຸມການເຮັດວຽກຂອງຮ່າງກາຍຫຼາຍໆບ່ອນເຮັດວຽກຜິດປົກກະຕິ ຈຶ່ງເກີດມີອາການຫຼາຍຢ່າງລວມກັນເຊັ່ນ: ຫົວໃຈເຕັ້ນໄວ, ເຫື່ອອອກຫຼາຍ, ຫາຍໃຈບໍ່ທັນ, ທ້ອງໄສ້ປັ່ນປ່ວນ, ວິນຫົວ ຄ້າຍຄືຊິເປັນລົມ ແລະ ເປັນອາການທີ່ເກີດຂຶ້ນຢ່າງກະທັນຫັນ ໂດຍທີ່ບໍ່ມີສາເຫດ ຫຼື ການຕົກໃຈແຕ່ຢ່າງໃດ ເຊິ່ງມັນເຮັດໃຫ້ຫຼາຍຄົນຄິດວ່າເປັນໂຣກຫົວໃຈ ແລະ ບໍ່ສາມາດຄວບຄຸມໂຕເອງໄດ້.

ພຶດຕິກໍາທີ່ພາໃຫ້ເກີດໂຣກແພນິກ ສາມາດພົບເຫັນໄດ້ຫຼາຍໃນຊີວິດປະຈໍາວັນເປັນຕົ້ນແມ່ນການບໍ່ກິນອາຫານເຊົ້າ ຫຼື ກິນອາຫານຟ້າວຟັ່ງ, ເຮັດວຽກກັບຄອມພິວເຕີເປັນເວລາດົນ, ພັກຜ່ອນບໍ່ພຽງພໍ, ຈິງຈັງ ແລະ ເຄັ່ງຄັດກັບການໃຊ້ຊີວິດ, ຢູ່ສະພາບແວດລ້ອມກົດດັນເປັນປະຈໍາ, ບໍ່ອອກກໍາລັງກາຍ ເຮັດໃຫ້ມີຄວາມຕຶງຄຽດສະສົມ ຫຼືບາງກໍລະນີ ກໍອາດເກີດຈາກມີອະດີດທີ່ຝັງໃຈ, ເຄີຍສູນເສຍ ຫຼື ເຄີຍມີເຫດການກະທົບຈິດໃຈຮຸນແຮງ.

ອາການຂອງໂຣກແພນິກ

- ໃຈສັ່ນ, ຫົວໃຈເຕັ້ນໄວ ແລະ ແໜ້ນໜ້າເອິກ
- ເຫື່ອອອກຫຼາຍ, ບຶດໜາວ-ບຶດຮ້ອນ
- ຫາຍໃຈຖີ່, ຫາຍໃຈຕັນ ແລະ ຮູ້ສຶກຫາຍໃຈບໍ່ອີ່ມ
- ວິນຫົວ, ຮູ້ສຶກໂລກໝຸນ ຢືນຢູ່ຄືໂຕລອຍ, ຄ້າຍຄືຊິເປັນລົມ
- ຮູ້ສຶກຢ້ານໄປໝົດທຸກຢ່າງ ໂດຍສະເພາະຢ້ານຕາຍ
- ຄວບຄຸມໂຕເອງບໍ່ໄດ້ ແລະ ຮູ້ສຶກຢູ່ຄົນດຽວບໍ່ໄດ້.

ເມື່ອມີລັກສະນະ ອາການຄືດັ່ງກ່າວມາຂ້າງເທິງນັ້ນ ຄວນໄປພົບແພດ ເພື່ອບົງມະຕິພະຍາດ ແລະ ປິ່ນປົວ ເຖິງວ່າໂລກນີ້ ບໍ່ອັນຕະລາຍເຖິງຊີວິດ ແຕ່ອາການຂອງມັນອາດຈະກ່ຽວເນື່ອງກັບບັນຫາສຸຂະພາບອື່ນຂອງທ່ານໄດ້ເຊັ່ນກັນ.

www.sanook.com



## ອາດ ກະວີລາວ

## ແມ່ຍິງຍຸກໃໝ່

# ໂດຍ: ສໍ. ພູທອນ

✳ 8 ມີນາ ເບີກຟ້າ
ວັນສະຕີສາກົນ
ທຸກແຫ່ງຫົນທໍາທ້ອງ
ແມ່ຜູ້ແສນສະຫຼາດກ້າ
ນະພາຮຸ່ງເຮືອງຮອງ
ທົ່ວແດນຍໍຍ້ອງ
ສະຫຼອງໄຊເຫັນຄ່າ
ໂລກາຍ້ອງຊື່ນຊົມ

✳ ງາມສົມຄໍາເອກອ້າງ
ສວມເຄື່ອງໄໝແພວາ
ລວດລາຍສີເຕີມແຕ້ມ
ປະກອບຍາມສິ່ງຍິ້ມ
ຫາຫຍັງເທົ່າທຽມທັນ
ບ່ຽງກາຍກວມເນື້ອ
ຊອນແຊມສານສອດ
ສະອອນເອ້ເດັ່ນງາມ

✳ ສໍານຽງຫວານອື່ນອ້ອຍ
ມົນສະເໜ່ຊວນຊົມ
ລະເມີນໍານວນນ້ອງ
ວັດທະນະທໍາຊິດໃກ້
ອອຍອ່ອຍຫຼົງໄຫຼ
ມັດຊວງຊາຍເຊື້
ສາວລາວຍຸກໃໝ່
ມີໄລລ້າລ່ວງເລີຍ

✳ ຮີດຄອງເຄີຍເກົ່າກີ້
ສິ້ນໄໝຜືນລາຍງາມ
ສາວລາວຜົວພັນກ້ຽງ
ງາມເລີດຍິ່ງທົ່ວຫຼ້າ
ປະເພນີຄູ່ຄຽງກາຍ
ຫົ່ມກາຍຜົມເກົ້າ
ມະໂນໃນໃສປະເສີດ
ນະພາກວ້າງເດັ່ນດັງ

✳ ນັກຮຽນເທັນຮ່ອມຮູ້
ມະຫາໄລສາວສວຍ
ພະນັກງານອົງການພ້ອມ
ສິ້ນລາວເຜີຍເອກອ້າງ
ມາແຕ່ອານຸບານ ຍ້ອນແມ່
ໃສ່ສວມເສີມສິ້ນ
ດູດີເປັນລະບຽບ
ສາກົນຮູ້ທົ່ວເຖິງ

✳ ຂໍຊົມເຊີຍຍົກຍ້ອງ
ບໍ່ໄດ້ໄລລາໜີ
ສິ້ນໄໝລາວກໍເຫງົ້າ
ພ້ອມສະຫງວນສືບໄວ້
ຍິງລາວໃໝ່ຄົງສະໄໝ
ປ່ອຍປະເພນີປື້ນ
ປາງປະຖົມມູນມັງແມ່
ໝາຍໝັ້ນຄູ່ລາວ ຊອບແລ້ວ!



## ມ່ວນຊື່ນ ສະບາຍ

(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)

# ສາວຈົ້ມ

✳ 8 ມີນາມໍ່ໃກ້ ຄົບຮອບຫລາຍພັນສາ 113 ປີວຽນມາ ລະນຶກທອບເທັບຮູ້ ຫລາຍເທດກາບຄາວກໍ້ ມີມາກ່າເບີດກໍ່ ພໍ່ໃຫ້ຄົບຮຸ່ນນ້ອຍ ຮຽນຮູ້ສືບສານ ຕອບແທບຄຸນທ່ານນັ້ນ ອວນອານໂຊກພອນໄຊ ໂຮມຫຼັ່ງໄຫລມາຫາ ແມ່ຍິງທັງໂລກ ມີໂຊກພອນໄຊພ້ອມ ຜິວພັນຜຸດຜ່ອງ ອາຍຸຍືນຍົງໝັ້ນ ພັນວັດສາຢ່າໄດ້ ເຫຼືອງແຫ້ງທ່ຽວເຫງົາ **ທ່ານເອີຍ!**

✳ **ພິ**ທີວາງສີລາລຶກໂຄງການກໍ່ສ້າງອາຄານອະເນກປະສົງ ແຄນຄູ່ (ໄລຍະທີ 1 ອາຄານຕຶບເສົ້າ) ຕັ້ງຢູ່ເຂດ A ຂອງໂຄງການ (ເຂດບ້ານທ່າຄໍ້ ເມືອງໂຂງ ແຂວງຈໍາປາສັກ) ເນື້ອທີ່ **9.846 ເຮັກຕາ** ແບ່ງອອກເປັນ **11 ເຂດ** ແລະ **6 ໄລຍະ**ການພັດທະນາ ມີ **2 ອາຄານ ສູງ 62 ແມັດ ມີ 13 ຊັ້ນ** ໃນນັ້ນ ມີເນື້ອທີ່ປຸກສ້າງ **6,7 ເຮັກຕາ** ມູນຄ່າກໍ່ສ້າງ **200** ລ້ານໂດລາ ໃຊ້ເວລາສ້າງ **3 ປີ** ແລະມີບ່ອນຮັບຮອງນັກທ່ອງທ່ຽວໄດ້ **2.000 ຄົນ** ຂໍຊົມເຊີຍຍົກຍ້ອງ **ພັກ-ລັດນໍາພາ** ຂໍໃຫ້ປວງປະຊາລາວ ຮຸ່ງເຮືອງຈະເລີນກ້າວ ປະຊາລາວລໍຖ້າເຫັນຄວາມເຮືອງຮຸ່ງ ຂໍໃຫ້ພຸ່ງເດັ່ນກ້າວ ຈະເລີນເລື້ອຍລື່ນຫຼັງ **ເທາະເນີ!**

## ຊວນຍິ້ມ

# ແອ່ນຕຸ້ງ



**ເລື່ອງ: ສະຫຼາດໄດ້ແມ່**

ສອງພໍ່ລູກລົມກັນ ແລະ ລູກ ກໍຖາມຂຶ້ນດ້ວຍຄວາມສົງໄສວ່າ:

**ລູກ:** ລູກໄດ້ຄວາມສະຫຼາດນໍາໃຜຫວາ?
**ພໍ່:** ໄດ້ນໍາແມ່ມຶງຫັ້ນລະ
**ລູກ:** ແຕ່ເຮົາວ່າໄດ້ນໍາພໍ່
**ພໍ່:** !!!

## ຄະຕິເຕືອນໃຈ

#ດອກສະຍອມ

ມີຄວາມຮູ້ນັ້ນຍັງບໍ່ພໍ
ຕ້ອງຮູ້ຈັກນໍາອອກມາໃຊ້
ມີຄວາມຕັ້ງໃຈຢ່າງດຽວບໍ່ພໍ
ຕ້ອງຮູ້ຈັກລົງມືເຮັດ




# ໄວ້ອາໄລ - ໄຫວ້ອາໄລ

ໃນໄລຍະຜ່ານມາ ມີບາງຄົນມັກໃຊ້ຄຳວ່າ "ໄວ້ອາໄລ" ເປັນ "ໄຫວ້ອາໄລ". ບໍ່ພຽງແຕ່ບາງຄົນເທົ່ານັ້ນ ຕະຫຼອດຮອດສື່ມວນຊົນບາງຂະແໜງກໍມັກໃຊ້ຜິດຢູ່ເລື້ອຍ... ບາດນີ້ ພວກເຮົາມາລອງວິເຄາະຄຳທີ່ມີບັນຫາດັ່ງກ່າວນີ້ຄັກໆເບິ່ງວ່າ ມັນມີກົກເຄົ້າເຫງົ້າກໍ ແລະຄວາມໝາຍແນວໃດກັນແທ້?

"ໄວ້ອາໄລ" ແມ່ນຄຳປະສົມລາວ-ປາລີ ຄື ໄວ້ + ອາລຍ = ໄວ້ອາລັຍ ແລ້ວແປງມາຂຽນແບບປັດຈຸບັນເປັນ "ໄວ້ອາໄລ" ເຊິ່ງມີບັນທຶກໄວ້ໃນວັດຈະນານຸກົມລາວທຸກສະບັບ.

"ໄວ້" ເປັນຄຳກິລິຍາ ມີຄວາມໝາຍວ່າ "ຮັກສາ, ແພງ, ໃຫ້ມີຢູ່, ໃຫ້ຜາກົດຢູ່, ເຊື່ອງ, ມ້ຽນ, ສະແດງ".

"ອາໄລ" ເປັນຄຳກິລິຍາ ໝາຍເຖິງ "ຫ່ວງໃຍ, ຫ່ວງຫາ, ລະນຶກເຖິງດ້ວຍຄວາມເສຍດາຍ".

ເມື່ອທັງສອງຄຳປະສົມເຂົ້າກັນແລ້ວ ຈຶ່ງກາຍເປັນ "ໄວ້ອາໄລ" ເຊິ່ງມີຄວາມໝາຍວ່າ "ສະແດງຄວາມຄິດເຖິງຜູ້ທີ່ລ່ວງລັບໄປແລ້ວດ້ວຍຄວາມເສຍດາຍ".

ຍ້ອນແນວນັ້ນ ເວລາເຂົ້າຮ່ວມພິທີສິ່ງສະການໃດໜຶ່ງ ເຮົາຈະເຫັນຢ່າງເປັນປະຈຳວ່າ ຫຼັງຈາກອ່ານປະຫວັດຂອງຜູ້ເສຍຊີວິດນັ້ນແລ້ວ ເພິ່ນກໍຈະບອກໃຫ້ຜູ້ເຂົ້າຮ່ວມພິທີກົ້ມຫົວໄວ້ອາໄລເປັນເວລາ 30 ວິນາທີ ຫຼື 1 ນາທີ... ໃນການໄວ້ອາໄລທີ່ເປັນພິທີການນັ້ນ ເຮົາຈະສັງເກດເຫັນວ່າ ບໍ່ມີການຍໍມືນົບແຕ່ປະການໃດ ມີແຕ່ກົ້ມຫົວສະຫງົບນິ້ງເທົ່ານັ້ນ.

ແຕ່ຍ້ອນວ່າຄຳ "ໄວ້" ແລະ "ໄຫວ້" ມີສຽງໃກ້ຄຽງກັນ ຕ່າງກັນກໍພຽງແຕ່ສຽງວັນນະຍຸດ ຈຶ່ງເຮັດໃຫ້ບາງຄົນເຂົ້າໃຈຜິດຄຶດໄປເອງວ່າ ການກົ້ມຫົວສະແດງຄວາມຄິດຮອດຜູ້ທີ່ລ່ວງລັບໄປແລ້ວດ້ວຍຄວາມເສຍດາຍນັ້ນ ແມ່ນການໄຫວ້ແບບໜຶ່ງ ຈຶ່ງຂຽນຫຼືອອກສຽງເປັນ "ໄຫວ້ອາໄລ". ແຕ່ໃນຕົວຈິງແລ້ວ ຄຳວ່າ "ໄຫວ້" ມີຄວາມໝາຍວ່າ "ທຳຄວາມເຄົາລົບໂດຍຍົກມືຂຶ້ນນົບ" ເຊັ່ນ ໄຫວ້ພະ, ໄຫວ້ເຈົ້າ, ໄຫວ້ທາດ, ໄຫວ້ຄູບາອາຈານ...

ສະນັ້ນ, ເພື່ອໃຫ້ຄວາມໝາຍຂອງຄຳສັບຖືກຕ້ອງຕາມກິລິຍາທ່າທີທີ່ສະແດງອອກເຖິງຄວາມຄິດຮອດຜູ້ທີ່ລ່ວງລັບໄປແລ້ວດ້ວຍຄວາມເສຍດາຍ ໂດຍກົ້ມຫົວສະຫງົບນິ້ງ ພວກເຮົາຄວນໃຊ້ຄຳວ່າ "ໄວ້ອາໄລ", ບໍ່ແມ່ນ "ໄຫວ້ອາໄລ".

ເວລາຂຽນ "ໄວ້ອາໄລ" ກໍຢ່າໄດ້ໄປຫຼົງຂຽນສະຫຼະໄອໄມ້ມາຍ (ໄx) ເປັນໄມ້ມ້ວນ (ໃx) ເດັດຂາດ. ຫາກໃຜຂຽນເປັນ "ໃວ້ອາໄລ", "ໄວ້ອາໃລ" ຫຼື "ໃວ້ອາໃລ" ຖືວ່າຂຽນຜິດ.

## ຫຼາຍບັນຫາ..

(ຕໍ່ຈາກໜ້າ 1)

ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ທີ່ຕິດພັນກັບໂຄງການລົງທຶນໃນຂະແໜງພະລັງງານໄຟຟ້າ ແລະ ບໍ່ແຮ່ ແລະ ໂຄງການລົງທຶນ ທີ່ສະເໜີກ່ຽວກັບການຫັນປ່ຽນເນື້ອທີ່ປ່າໄມ້ທຳມະຊາດໄປເປັນທີ່ດິນປະເພດອື່ນຢູ່ແຂວງໄຊຍະບູລີ ແລະ ແຂວງຫລວງພະບາງ; ລາຍງານຜົນການຄົ້ນຄວ້າໜັງສືສະເໜີຂອງລັດຖະບານ ກ່ຽວກັບການສະເໜີຂໍໃຫ້ສະພາແຫ່ງຊາດ ພິຈາລະນາຮັບຮອງເອົາໂຄງການລົງທຶນຂະໜາດໃຫຍ່ຈຳນວນໜຶ່ງ; ລາຍງານສະພາບການຈັດສັນງົບປະມານໂຄງການລົງທຶນຂອງລັດ ປະຈຳປີ 2023 ແລະ ແຜນການອວ່າຍໜີ້ 3 ແຈ ປະຈຳປີ 2023; ລາຍງານການປະຕິບັດ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 168/ຄປຈ, ລົງວັນທີ 6 ມິຖຸນາ 2022 ວ່າດ້ວຍການຮັບຮອງເອົາມາດຕະການຮັກສາສະຖຽນລະພາບຂອງລາຄານ້ຳມັນເຊື້ອໄຟ ໃນສະພາບລາຄານ້ຳມັນເຊື້ອໄຟເໜັງຕີງສູງ. ພ້ອມນັ້ນ, ບັນດາທ່ານທີ່ເຂົ້າຮ່ວມຍັງໄດ້ພ້ອມກັນຄົ້ນຄວ້າ ແລະ ພິຈາລະນາປະກອບຄຳຄິດຄຳເຫັນຢ່າງມີຈຸດສຸມ ແລະ ກົງໄປກົງມາ ເຮັດໃຫ້ບົດລາຍງານຕ່າງໆທີ່ນຳເຂົ້າມາພິຈາລະນາໃນຄັ້ງນີ້ມີເນື້ອໃນຄົບຖ້ວນຍິ່ງຂຶ້ນ.

(ສົມນຶກ ແກ້ວໄຊຍະຈັກ)




# ລັດຖະບານຈີນ ສະໜັບສະໜູນການມີລູກ



ອາຍຸສະເລ່ຍສຳລັບການແຕ່ງດອງຄັ້ງທຳອິດຂອງແມ່ຍິງຈີນໃນປີ 2020 ຢູ່ທີ່ 26,3 ປີ ເພີ່ມຂຶ້ນຈາກທົດສະວັດທີ 80 ທີ່ມີອາຍຸສະເລ່ຍ 22 ປີ ແລະ ອາຍຸສະເລ່ຍສຳລັບການມີລູກຄົນທຳອິດໃນປີ 2020 ຢູ່ທີ່ 27,2 ປີ.

ມີການລາຍງານຂ່າວໃຫ້ຮູ້ວ່າ: ຮອງຜູ້ອຳນວຍການສະມາຄົມວາງແຜນຄອບຄົວຂອງຈີນ ເປີດເຜີຍຂໍ້ມູນວ່າ: ຈຳນວນຄົນໃນຄອບຄົວ ໃນຈີນປີ 2020 ມີ 2,62 ຕໍ່ຄອບຄົວ ຫຼຸດລົງ 0,48 ເມື່ອທຽບໃສ່ປີ 2010 ເຊິ່ງສາເຫດຕົ້ນຕໍທີ່ຈີນມີອັດຕາການເກີດຕໍ່າມາຈາກຄົນໄວໜຸ່ມມີທັດສະນະຄະຕິເລື່ອງການແຕ່ງດອງ ແລະ ໄລຍະເວລາຂອງການເລີ່ມຕົ້ນຄອບຄົວປ່ຽນໄປ.

ໂດຍອາຍຸສະເລ່ຍສຳລັບການແຕ່ງດອງຄັ້ງທຳອິດຂອງແມ່ຍິງໃນຈີນປີ 2020 ຢູ່ທີ່ 26,3 ປີ ເພີ່ມຂຶ້ນຈາກທົດສະວັດທີ 80 ທີ່ມີອາຍຸສະເລ່ຍ 22 ປີແລະອາຍຸສະເລ່ຍສຳລັບການມີລູກຄົນທຳອິດໃນປີ 2020 ຢູ່ທີ່ 27,2 ປີ.

ຂະນະດຽວກັນ, ຜູ້ຍິງທີ່ມີອາຍຸໃນໄວນີ້ຖືພາໄດ້ ມີຄວາມຕ້ອງການໜ້ອຍລົງທີ່ຈະມີລູກ ດ້ວຍເຫດນີ້ລັດຖະບານຈີນຈຶ່ງໃຊ້ມາດຕະການຫລາຍຢ່າງໃນການສະໜັບສະໜູນຄົນໜຸ່ມສາວໃຫ້ມີລູກຫລາຍຂຶ້ນ ໂດຍເນັ້ນຫຼຸດຄ່າໃຊ້ຈ່າຍໃນການລ້ຽງລູກເຊັ່ນ: ຢູ່ເມືອງຈີ່ໜານ ປະຊາຊົນທີ່ໄດ້ຮັບການຄຸ້ມຄອງຈາກການປະກັນສຸຂະພາບ ຈະໄດ້ຮັບເງິນ 3 ພັນຢວນສຳລັບການເກີດລູກ, ເມືອງພານຈືຮວາ ຈະໃຫ້ເງິນອຸດໜູນຄອບຄົວທີ່ມີລູກ 2 ຄົນ ແລະ 3 ຄົນ ເດືອນລະ 500-600 ຢວນ ຈົນກວ່າເດັກຈະມີອາຍຸຄົບ 3 ປີ. ນອກຈາກນີ້ ລັດຖະບານມີແຜນຈະເພີ່ມຈຳນວນສູນຮັບລ້ຽງເດັກນຳອີກ.

# ນາຍົກໄທ ປະກາດວ່າຈະຍຸບສະພາ ແລະ ຈັດການເລືອກຕັ້ງໃໝ່



ອີງຕາມການລາຍງານຂ່າວ ໃຫ້ຮູ້ວ່າ: ໃນວັນທີ 21 ກຸມພາ 2023 ພາຍຫຼັງສຳເລັດກອງປະຊຸມລັດຖະບານ, ທ່ານ ປະຢຸດ ຈັນໂອຊາ ນາຍົກລັດຖະມົນຕີໄທ ໄດ້ແຈ້ງໃຫ້ສື່ມວນຊົນຊາບວ່າ: ຈະມີການຍຸບສະພາໃນເດືອນມີນາທີ່ຈະມາເຖິງນີ້ ເຊິ່ງທ່ານ ປະຢຸດ ຈັນໂອຊາ ໄດ້ກ່າວວ່າ: "ສຳລັບເວລາຈັດການເລືອກຕັ້ງແມ່ນອີງຕາມເວລາທີ່ຄະນະກຳມະການເລືອກຕັ້ງໄດ້ປະກາດໄປກ່ອນໜ້ານີ້ ຄື: ວັນທີ 7 ພຶດສະພາປີນີ້".

# ມາເລເຊຍ ຈະຍົກເລີກການຄຸ້ມຄອງ ແລະ ຄວບຄຸມລາຄາຊີ້ນໄກ່ ແລະ ໄຂ່ໄກ່




ມີການລາຍງານຂ່າວໃນວັນທີ 21 ກຸມພານີ້ວ່າ: ກະຊວງກະສິກຳ ແລະ ຄວາມປອດໄພດ້ານອາຫານຂອງມາເລເຊຍແຈ້ງໃຫ້ຮູ້ວ່າ: ເພື່ອແກ້ໄຂບັນຫາຂາດເຂີນອາຫານ, ລັດຖະບານມາເລເຊຍຈະຍົກເລີກການຄຸ້ມຄອງ ແລະ ຄວບຄຸມລາຄາຊີ້ນໄກ່ ແລະ ໄຂ່ໄກ່ ນັບແຕ່ເດືອນມິຖຸນາປີນີ້ ເປັນຕົ້ນໄປ.

ປັດຈຸບັນ, ຢູ່ແຫຼມມາເລ ລາຄາຊີ້ນໄກ່ສູງສຸດບໍ່ໃຫ້ເກີນ 35.800 ກີບຕໍ່ກິໂລ, ລາຄາສູງສູດຂອງໄຂ່ໄກ່ບໍ່ໃຫ້ເກີນ 1.640 ກີບ ຕໍ່ໜ່ວຍ ໂດຍອີງຕາມຄຸນນະພາບຕ່າງກັນ.

ນັບແຕ່ຕົ້ນປີ 2022 ເປັນຕົ້ນມາ ລາຄາຊີ້ນໄກ່ ແລະ ໄຂ່ໄກ່ຢູ່ປະເທດມາເລເຊຍ ໄດ້ເພີ່ມສູງຂຶ້ນຢ່າງບໍ່ຢຸດຢັ້ງ, ເຮັດໃຫ້ຄ່າຄອງຊີບຂອງຜູ້ບໍລິໂພກເພີ່ມຂຶ້ນຢ່າງຕໍ່ເນື່ອງ, ລັດຖະບານມາເລເຊຍ ຈຶ່ງໄດ້ປະກາດມາດຕະການຄຸ້ມຄອງ ແລະ ຄວບຄຸມລາຄາອາຫານປະເພດດັ່ງກ່າວ ນັບແຕ່ເດືອນກໍລະກົດປີກາຍນີ້ເປັນຕົ້ນມາ.

ເຊິ່ງກ່ອນໜ້ານີ້ ໃນວັນທີ 17 ກຸມພາຜ່ານມາ, ສື່ມວນຊົນມາເລເຊຍ ໄດ້ລາຍງານວ່າ: ທ່ານ ອັນວາ ໄອບຣາຮິມ ນາຍົກລັດຖະມົນຕີມາເລເຊຍກ່າວວ່າ: ເພື່ອສະກັດກັ້ນໄພເງິນເຟີ້, ລັດຖະບານມີແຜນການຈະຮັກສາລະບຽບການຄວບຄຸມລາຄາສິນຄ້າ ແລະ ອຸດໜູນສິນຄ້າພິເສດທີ່ມີຢູ່ໃນປັດຈຸບັນ, ຄາດວ່າ ຈະສາມາດຄວບຄຸມບັນຫາທີ່ລາຄາສິນຄ້າເພີ່ມສູງຂຶ້ນຢ່າງມີປະສິດທິຜົນພາຍໃນປີ 2023.

ອີງຕາມຜົນການສຳຫຼວດຂອງກົມສະຖິຕິມາເລເຊຍໃຫ້ຮູ້ວ່າ: ຖ້າຫາກບໍ່ມີລະບຽບດັ່ງກ່າວ, ລະດັບໄພເງິນເຟີ້ຂອງປະເທດຕົນຈະຫຼາຍກວ່າ 10%. ຕົ້ນທຶນການດຳລົງຊີວິດເພີ່ມສູງຂຶ້ນ ແລະ ລາຄາສິນຄ້າເພີ່ມສູງຂຶ້ນຢ່າງຕໍ່ເນື່ອງ, ນີ້ແມ່ນສິ່ງທ້າທາຍສຳຄັນທີ່ເສດຖະກິດມາເລເຊຍພວມປະເຊີນຢູ່ໃນຕໍ່ໜ້ານີ້.

ເບິ່ງໄວ້ ໄດ້ຫຼັກຮຽນ

❖ ວິເສດ ສະແຫວງສຶກສາ

# ຕົວຢ່າງກົດໝາຍດີ ແລະ ນະໂຍບາຍດີໆ ສຳລັບແມ່ຍິງ



ພາຍໃຕ້ຫົວຂໍ້ບົດທີ່ບັນດາທ່ານພວມອ່ານຢູ່ນີ້, ຜູ້ຂຽນຂໍພາທ່ານໄປຮູ້ຈັກກັບເລື່ອງລາວທີ່ເກີດຂຶ້ນຢູ່ປະເທດອິນເດຍ, ບັງກະລາເທດ ແລະ ຟີລິບປິນ ເຊິ່ງທັງໝົດແມ່ນກ່ຽວກັບກົດໝາຍ ກໍຄືນະໂຍບາຍທີ່ເປັນທຳ ເພື່ອຄ້ຳປະກັນສິດທິ ແລະ ສຸຂະພາບຂອງແມ່ຍິງ. ທີ່ປະເທດອິນເດຍ ເມື່ອປະມານເກືອບ 5 ປີຜ່ານມາ ສານສູງສຸດຂອງປະເທດນີ້ ໄດ້ອອກຄຳພິພາກສາຍົກເລີກກົດໝາຍວ່າດ້ວຍການຢ່າຮ້າງຕາມປະເພນີຂອງຊາວມຸດອະລິມ ທີ່ລັດຖະສະພາອິນເດຍ ໄດ້ຮັບຮອງເອົາກ່ອນໜ້ານັ້ນ ເພາະເຫັນວ່າມັນຂັດຕໍ່ລັດຖະທຳມະນູນຂອງອິນເດຍ. ກົດໝາຍວ່າດ້ວຍການຢ່າຮ້າງ ຕາມຫຼັກສາສະໜາອິດສະລາມອະນຸຍາດໃຫ້ຝ່າຍຊາຍປະຮ້າງຝ່າຍຍິງແບບງ່າຍດາຍ ປານປ່ອນກ້ອຍເຂົ້າປາກ ຄື ຖ້າຜູ້ເປັນຜົວຕ້ອງການຢ່າຮ້າງກັບຜູ້ເປັນເມຍ ກໍສາມາດຮ້າງໄດ້ ດ້ວຍການເປັ່ງຄຳເວົ້າ ພຽງສອງພະຍາງສາມເທື່ອຊ້ອນໆກັນອອກມາວ່າ "ເທາະລາ! ເທາະລາ! ເທາະລາ!" ເທົ່ານັ້ນ ກໍຖືວ່າເລີກກັນໄດ້. ໃນທີ່ສຸດ ກົດໝາຍຍົກເລີກປະເພນີຢ່າຮ້າງຕາມຫຼັກສາສະໜາຂອງອິດສະລາມນັ້ນ ກໍຖືກປະກາດໃຊ້ພາຍໃຕ້ລັດຖະບານຂອງທ່ານ ເຣນທຣາໂມດີ, ນາຍົກລັດຖະມົນຕີຄົນປັດຈຸບັນຂອງອິນເດຍ ດ້ວຍເຫດຜົນທີ່ວ່າ ການຢ່າຮ້າງດ້ວຍການເປັ່ງຄຳເວົ້າສອງພະຍາງອອກມາ ຕາມຫຼັກສາສະໜາອິດສະລາມນັ້ນ ເປັນທຳນຽມບູຮານ ທີ່ມີຂອບເຂດຈຳກັດໃນປະຫວັດສາດ. ເຫດຜົນນີ້ມີຄວາມໝາຍວ່າ ກົດໝາຍສະບັບນີ້ບໍ່ມີສອດຄ່ອງກັບສັງຄົມອິນເດຍໃນຍຸກປັດຈຸບັນແລ້ວ. ຂ່າວ AP ທີ່ເຜີຍແຜ່ເລື່ອງນີ້ໃຫ້ຮູ້ຕື່ມວ່າ ການອອກກົດໝາຍຍົກເລີກທຳນຽມການຢ່າຮ້າງຕາມຫຼັກສາສະໜາອິດສະລາມ ໄດ້ປະເຊີນກັບສຽງວິພາກວິຈານ ຈາກປະຊາຊົນທີ່ນັບຖືສາສະໜາອິດສະລາມ ໃນອິນເດຍວ່າລັດຖະບານມີເຈດຕະນາແຊກແຊງ ແລະ ມີອະຄະຕິຕໍ່ຊາວອິດສະລາມ ທີ່ເປັນກຸ່ມຄົນເຜົ່ານ້ອຍທີ່ສຸດໃນອິນເດຍ.

ບັດນີ້ ຂໍໂງມາສູ່ເລື່ອງທີ່ໜ້າສົນໃຈ ທີ່ເກີດຂຶ້ນຢູ່ປະເທດ ບັງກະລາເທດ ເຊິ່ງມີຊາຍແດນຕິດກັບປະເທດອິນເດຍຫັ້ນລະ. ຂ່າວຕ່າງປະເທດໃນຕົ້ນເດືອນກັນຍາ 2019 ໃຫ້ຮູ້ວ່າ ສານສູງສຸດຂອງບັງກະລາເທດ ໄດ້ຕັດສິນຍົກເລີກແບບຟອມທະບຽນແຕ່ງດອງ ທີ່ແມ່ຍິງຕ້ອງໄດ້ໝາຍໃສ່ ເພາະເຫັນວ່າເປັນແບບຟອມທີ່ຫຼ້າສະໄໝ ທັງມີເນື້ອໃນຈຳແນກ ເຮັດໃຫ້ແມ່ຍິງອັບອາຍຂາຍໜ້າ. ຢູ່ແບບຟອມທະບຽນດັ່ງກ່າວນັ້ນ ມີສາມປ່ອງທີ່ຝ່າຍຍິງ ຕ້ອງໄດ້ໝາຍໃສ່ຄື: 1. ປ່ອງທີ່ບອກວ່າເປັນສາວບໍລິສຸດ (ບໍ່ເຄີຍມີເພດສຳພັນມາກ່ອນ); 2. ປ່ອງທີ່ບອກວ່າ ເປັນແມ່ໝ້າຍ ແລະ ປ່ອງທີ 3 ທີ່ບອກວ່າ ເປັນແມ່ຮ້າງ. ຂ່າວບອກວ່າ ປ່ອງທີ 1 ທີ່ບອກວ່າ ສາວບໍລິສຸດນັ້ນ ໄດ້ປະເຊີນກັບກະແສຕ້ານທານຈາກສັງຄົມ ແລະ ບັນດານັກເຄື່ອນໄຫວ ເພື່ອສິດທິຂອງແມ່ຍິງໃນບັງກະລາເທດ ມາເປັນເວລາຊ້ານານແລ້ວ. ໃນປີ 2014 ກຸ່ມນັກເຄື່ອນໄຫວດັ່ງກ່າວ ໄດ້ຍື່ນຄຳຮ້ອງຕໍ່ສານສູງ ໃຫ້ພິຈາລະນາແກ້ໄຂເນື້ອໃນແບບຟອມຈົດທະບຽນດັ່ງກ່າວທີ່ທາງກຸ່ມຖືວ່າໄດ້ຮັບຄວາມອັບອາຍ ແລະ ລະເມີດສິດສ່ວນຕົວຂອງແມ່ຍິງ. ໃນທີ່ສຸດ ການເຄື່ອນໄຫວຕໍ່ສູ້ດັ່ງກ່າວ ກໍໄດ້ຮັບຜົນສຳເລັດ ໂດຍສານສູງສຸດໄດ້ຕົກລົງປ່ຽນເນື້ອໃນຂອງປ່ອງທີ 1 ໃນແບບຟອມ ຈາກຄຳວ່າ ສາວບໍລິສຸດ ມາເປັນ "ຜູ້ຍິງທີ່ບໍ່ເຄີຍຜ່ານການແຕ່ງດອງມາກ່ອນ".

ແຫຼ່ງຂ່າວ BBC ທີ່ສະເໜີເລື່ອງນີ້ໄດ້ສະຫຼຸບວ່າ ກົດໝາຍວ່າດ້ວຍການແຕ່ງດອງຂອງບັງກະລາເທດນັ້ນ ຍັງມີຂໍ້ກຳນົດທີ່ຈຳກັດສິດທິຂອງແມ່ຍິງ ແລະ ເລືອກປະຕິບັດ. ຕໍ່ໄປແມ່ນຂ່າວຍ່ອຍຈາກຟີລິບປິນ ທີ່ບອກວ່າທາງການຂອງປະເທດນີ້ ໄດ້ປະກາດຫ້າມ ບໍລິສັດ ກໍຄືສຳນັກງານສະຖານທີ່ປະກອບການຕ່າງໆ ບັງຄັບໃຫ້ພະນັກງານຍິງໃສ່ເກີບສົ້ນສູງໃນບ່ອນເຮັດວຽກ ໂດຍສະເພາະແມ່ນພະນັກງານທີ່ຕ້ອງໄດ້ຢືນເປັນເວລາດົນນານ ເຊັ່ນ ພະນັກງານຕ້ອນຮັບຕາມໂຮງແຮມ, ສະໜາມບິນ ກໍຄືພະນັກງານພິທີການ ເພາະການໃສ່ເກີບສົ້ນສູງນັ້ນ ເປັນອັນຕະລາຍຕໍ່ສຸຂະພາບຂອງແມ່ຍິງ. ມາພ້ອມກັບຄຳສັ່ງຫ້າມໂດຍກະຊວງແຮງງານຟີລິບປິນແລ້ວ ກໍຍັງມີຂໍ້ແນະນຳໃຫ້ບັນດາບໍລິສັດ ກໍຄືສະຖານທີ່ປະກອບການ ບ່ອນທີ່ມີພະນັກງານເພດຍິງ ຕ້ອງໄດ້ຢືນເຮັດວຽກເປັນເວລາດົນ ຄວນອອກຂໍ້ກຳນົດໃຫ້ພະນັກງານເຫຼົ່ານັ້ນ ໃສ່ເກີບຂະໜາດພໍດີ ຄືຂະໜາດສົ້ນສູງ ປະມານ 2,54 ຊັງຕີແມັດ. ນອກຈາກນັ້ນ ຍັງຕ້ອງຈັດສັນເວລາພັກຜ່ອນກາງເວລາເຮັດວຽກສຳລັບພະນັກງານທີ່ຢືນເຮັດວຽກເປັນເວລາດົນອີກດ້ວຍ.

## ຮ່າງກາຍ ແລະ ວິນຍານ

*#ບ່າວກະບື*

*ວິນຍານ ຂອງຊາຍຄົນໜຶ່ງ ລ່ອງລອຍອອກຈາກຮ່າງກາຍແລ້ວລົດຂຶ້ນໄປພົບກັບເທວະທູດ "ເຊັນພີເຕີໃກ້ກູລ້ານກີບ" ຢູ່ໜ້າປະຕູສູ່ເມືອງສະຫວັນຊັ້ນຟ້າ. ເທວະທູດ ເວົ້າກັບເຂົາວ່າ: "ເຈົ້າເປັນຄົນດີ. ກ່ອນຈະຮັບເຈົ້າເຂົ້າສູ່ປະຕູສະຫວັນ, ເຮົາອະນຸຍາດໃຫ້ເຈົ້າແນມກັບຄືນເບິ່ງພື້ນໂລກເປັນເທື່ອສຸດທ້າຍ" ວິນຍານຂອງຊາຍຄົນນັ້ນ ປະຕິບັດຕາມຄຳສັ່ງ ແລະ ແລ້ວກໍຫົວຂຶ້ນອັກໆ. ເຊັນ ພີເຕີແປກໃຈ ຈຶ່ງຖາມວ່າ:*

*"ເຫດໃດເຈົ້າຈຶ່ງຫົວ?"*

*"ເອີ... ຄືດັ່ງຊີ້ບໍທ່ານ, ຂ້ານ້ອຍມາຮອດປະຕູສະຫວັນພໍແຮງແລ້ວ, ແຕ່ຢູ່ໂຮງໝໍພຸ້ນພວກດອກເຕີທັງຫຼາຍ ຍັງພາກັນປຶກສາຫາລືກັນເລື່ອງວ່າຊິປິ່ນປົວຂ້ານ້ອຍໃຫ້ຫາຍໄດ້ແນວໃດ"*

## BODY AND SOOL

***#BAOKBU***

The soul of a man left his body, flew up and met Saint Peter in front of the Heaven gate. Saint Peter said to him: "You are a good man. Before accepting you to the Heaven, I allow you to have a look at the earth for the last time." The soul did as ordered and laughed loudly. Saint Peter was surprised and asked: "Why are you laughing?"

"Sir, I've arrived at the gate of heaven, but downthere at the hospital, those doctors are still holding a consultation to cure me!"



ຂີ່ອນກາຍ ອັນຕະລາຍຫຼາຍເດີ

● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

ຜູ້ຊີ້ນຳ :
ທ່ານ ສິງຄຳ ວົງພະຈັນ

ຄະນະຊ່ຽວຊານທີ່ປຶກສາ :
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

ຄະນະບັນນາທິການ :
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ
ທ່ານ ອັນທະວີ ວົງພະຈັນ ຮອງ ບກ
ທ່ານ ເປຄຳ ລໍຄຳສອນ ຮອງ ບກ

ກອງບັນນາທິການ :
ນາງ ກົງໃຈ ແສງອຳພັນ
ນາງ ສຸພາວັນ ທອນສະນິດ
ນາງ ປາກາລັກ ພົມມີໄຊ

ອອກແບບ - ຈັດໜ້າ :
ທ່ານ ຄຳຫວັນ ດາລາວົງ
ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ